ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

25-27 ພະຈິກ 2022
ປີທີ 11
ສະບັບທີ 894

## ປະທານສະພາແຫ່ງຊາດ ສຳເລັດການເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 43

(ສພຊ) ໃນວັນທີ 24 ພະຈິກ 2022, ທີ່ ພະນົມເປັນ ຣາຊະອານາຈັກກຳປູເຈຍ. ພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງ ຂອງສະພາແຫ່ງຊາດລາວ ໄດ້ສຳເລັດການເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 43 ເຊິ່ງກອງປະຊຸມດັ່ງກ່າວ, ໄດ້ດຳເນີນມາແຕ່ວັນທີ 20-24 ພະຈິກ 2022 ພາຍໃຕ້ການເປັນປະທານຂອງ ສົມເດັດ ອັກຄະມະຫາ ໂປເຍຍ ຈັກກຼີ ເຮັງຊຳຣິນປະທານສະພາແຫ່ງຊາດ ແຫ່ງ ຣາຊະອານາຈັກກຳປູເຈຍ, ປະທານໄອປາ ຄັ້ງທີ 43.



ກອງປະຊຸມຄັ້ງນີ້, ຄະນະຜູ້ແທນທີ່ເຂົ້າຮ່ວມໄດ້ສຸມໃສ່ຄົ້ນຄວ້າ, ປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນ ພາຍໃຕ້ຫົວຂໍ້: "ການກ້າວໄປພ້ອມກັນ ເພື່ອອາຊຽນທີ່ຍືນຍົງ, ກວມລວມ ແລະ ເຂັ້ມແຂງ" ພ້ອມທັງຄົ້ນຄວ້າ ແລະ ປະກອບຄຳເຫັນຕໍ່ບັນດາຮ່າງມະຕິທີ່ສະເໜີໃນກອງປະຊຸມຄະນະກຳມາທິການຕ່າງໆຂອງໄອປາ ຄື: ກອງປະຊຸມຄະນະສະມາຊິກລັດຖະສະພາເພດຍິງ, ກອງປະຊຸມສະມາຊິກລັດຖະສະພາໜຸ່ມ, ກອງປະຊຸມກຳມາທິການການເມືອງ, ກຳມາທິການເສດຖະກິດ, ກຳມາທິການສັງຄົມ ແລະ ກຳມາທິການວຽກງານພາຍໃນ ຂອງໄອປາ ເຊິ່ງໄດ້ມີການພິຈາລະນາ ຮ່າງມະຕິທັງໝົດ ຈຳນວນ 38 ສະບັບ ທີ່ປິ່ນອ້ອມຫົວຂໍ້ຂອງກອງປະຊຸມ ໂດຍສະເພາະແມ່ນການສົ່ງເສີມບົດບາດຂອງສະມາຊິກລັດຖະສະພາເພດຍິງ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ, ການຊຸກຍູ້ການພົວພັນຮ່ວມມືຂອງຊາວໜຸ່ມ, ການສົ່ງເສີມສັນຕິພາບ, ຄວາມສາມັກຄີ, ການສົ່ງເສີມການທູດລັດຖະສະພາ, ການຮ່ວມມືຂອງລັດຖະສະພາ ເພື່ອການພັດທະນາແບບຍືນຍົງ ແລະ ການເຕີບໂຕຂອງເສດຖະກິດແບບກວມລວມ, ການສົ່ງເສີມວິສາຫະກິດຈຸລະພາກ, ຂະໜາດນ້ອຍ ແລະ ກາງ (MSMEs), ການຫັນເປັນດິຈິຕອນ, ການປົກປັກຮັກສາສັງຄົມແບບກວມ

ອ່ານຕໍ່ໜ້າ 2

## ພົບປະ 2 ຝ່າຍ ລະຫວ່າງ ລາວ-ສິງກະໂປ



ໜ້າ 2

## ຮອງປະທານສະພາແຫ່ງຊາດ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງເອກອັກຄະລັດຖະທູດ ສ.ເກົາຫລີ

(ສພຊ) ວັນທີ 24 ພະຈິກ 2022, ທີ່ສະພາແຫ່ງຊາດ ນະຄອນຫລວງວຽງຈັນ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ຈອງ ຢອງ ຊຸ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສ.ເກົາຫລີ ປະຈຳ ສປປລາວ ໃນໂອກາດທີ່ທ່ານໄດ້ຮັບຕຳແໜ່ງເປັນ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສ.ເກົາຫລີ ຄົນໃໝ່ ປະຈຳ ສປປລາວ ເຊິ່ງຈຸດປະສົງຂອງການເຂົ້າຢ້ຽມຂໍ່ານັບຄັ້ງນີ້ ແມ່ນເພື່ອສະເໜີຕົວ



ແລະ ປຶກສາຫາລືກ່ຽວກັບການເສີມສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນເປັນມູນເຊື້ອທີ່ດີງາມມາແຕ່ດົນນານ ລະຫວ່າງ ສປປລາວ ແລະ ສ.ເກົາຫລີ ກໍຄືການພົວພັນຮ່ວມ

ອ່ານຕໍ່ໜ້າ 3

## ກອງປະຊຸມປະຈຳປີ 2022 ຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ

(ສພຊ) ວັນທີ 18 ພະຈິກຜ່ານມາ, ທີ່ແຂວງຄຳມ່ວນ ໄດ້ເປີດກອງປະຊຸມ ປະຈຳປີ 2022 ຂອງຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ ໂດຍການເປັນປະທານຂອງທ່ານ ບຸນມີ ພົມມະສອນ ປະທານສະພາປະຊາຊົນແຂວງ ທັງເປັນປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ ໂດຍການເຂົ້າຮ່ວມຂອງທ່ານຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 12; ທ່ານ ປອ. ສົມສະອາດ ອຸ່ນສີດາ ຮອງເຈົ້າແຂວງຄຳມ່ວນ, ມີບັນດາທ່ານຄະນະປະຈຳພັກແຂວງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ, ບັນດາພະແນກການອ້ອມຂ້າງແຂວງ, ອົງການທຽບເທົ່າ ແລະ ແຂກຖືກເຊີນເຂົ້າຮ່ວມ.

ໃນພິທີ, ທ່ານ ບຸນມີ ພົມມະສອນ ໄດ້ກ່າວເປີດກອງປະຊຸມວ່າ: ເພື່ອສະຫລຸບຕີລາຄາຄືນໃນການຈັດ

ອ່ານຕໍ່ໜ້າ 3

## ຍົກສູງຂີດຄວາມສາມາດໃຫ້ພະນັກງານເສນາທິການ




(ສພຊ) ໃນວັນທີ 23 ພະຈິກ 2022 ທີ່ຫ້ອງປະຊຸມສຳນັກງານປົກຄອງແຂວງຈຳປາສັກ ໄດ້ຈັດກອງປະຊຸມເຝິກອົບຮົມຍົກສູງຂີດຄວາມສາມາດໃຫ້ພະນັກງານເສນາທິການຂອງສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານສະຖາບັນຄົ້ນຄວ້ານິຕິກຳກ່ຽວກັບການເກັບກຳ ແລະ ສະໜອງ

ອ່ານຕໍ່ໜ້າ 3

## ຄະນະຜູ້ແທນລາວ ເຂົ້າຮ່ວມກອງປະຊຸມກຳມາທິການວຽກງານພາຍໃນ



(ສພຊ) ວັນທີ 22 ພະຈິກ 2022 ທີ່ພະນົມເປັນ ຣາຊະອານາຈັກກຳປູເຈຍ ຄະນະຜູ້ແທນລາວໄດ້ເຂົ້າຮ່ວມກອງປະຊຸມວຽກງານພາຍໃນ ເຊິ່ງນຳໂດຍທ່ານ ນາງ ປິ່ງຄຳ ລາຊະສິມມາ ເລຂາທິການສະພາແຫ່ງຊາດແຫ່ງ ສປປລາວ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມກຳມາທິການວຽກງານພາຍໃນ ເນື່ອງໃນໂອກາດເຂົ້າຮ່ວມກອງປະຊຸມ AIPA ຄັ້ງທີ 43 ທີ່ພະນົມເປັນ, ພາຍໃຕ້ການເປັນປະທານຂອງທ່ານ Chhit Kimyeat ຮອງປະທານກຳມາທິການການຕ່າງ

ອ່ານຕໍ່ໜ້າ 3


ໜ້າ 4


ໜ້າ 4


ໜ້າ 4


ໜ້າ 5


ໜ້າ 5


ໜ້າ 5

ຂໍ່ານັບຮັບຕ້ອນ ວັນຊາດ 2 ທັນວາ (02/12/1975-02/12/2022) ຄົບຮອບ 47 ປີ ຢ່າງສຸດໃຈ!




## ປະທານ...

ລວມ, ການຮັກສາສຸຂະພາບ; ພ້ອມກັນນີ້, ກອງປະຊຸມ ຍັງໄດ້ມີການປັບປຸງບົດບັນທຶກການຮ່ວມມືລະຫວ່າງ ໄອປາ ກັບຄູ່ຮ່ວມອື່ນໆຈຳນວນໜຶ່ງ, ພ້ອມທັງເຫັນດີສ້າງຕັ້ງຫ້ອງສະໝຸດກົດໝາຍດິຈິຕອນ, ຕົກລົງເຫັນດີຮັບເອົາລັດຖະສະພາ ສ.ອາເມລິກາ, ເນປານ, ອັດເຊີໄບຈານ ແລະ ຈໍເຈຍ ເຂົ້າເປັນປະເທດສັງເກດການໃໝ່ຂອງໄອປາ ແລະ ມອບລາງວັນກຽດຕິຄຸນໃຫ້ແກ່ຜູ້ທີ່ມີຜົນງານດີເດັ່ນ 3 ທ່ານ ຈາກລັດຖະສະພາບຣູໄນ, ກຳປູເຈຍ ແລະ ຟີລິບປິນ ທີ່ໄດ້ປະກອບສ່ວນເຂົ້າໃນວຽກງານໄອປາ. ນອກຈາກນັ້ນ, ກອງປະຊຸມຍັງໄດ້ຊົມເຊີຍຕໍ່ການສຳເລັດໜ້າທີ່ການເປັນເລຂາທິການໃຫຍ່ໄອປາຄົນທີ 5 ຂອງທ່ານ ນາງ Nguyen Tuong Van ຈາກ ສສ.ຫວຽດນາມ ແລະ ຮັບຮອງເອົາການແຕ່ງຕັ້ງທ່ານ ນາງ Siti Rozaimeriyanty DSLJ Haji Abdul Rahman ຈາກ ບຣູໄນ ເປັນເລຂາທິການໃຫຍ່ໄອປາຄົນໃໝ່ຕາມລຳດັບ.

ພ້ອມດຽວກັນນັ້ນ, ໃນການເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ໄອປາຄັ້ງນີ້ ຄະນະຜູ້ແທນສະພາແຫ່ງຊາດລາວ ຍັງໄດ້ເຂົ້າຮ່ວມກັບຄະນະຜູ້ແທນສະມາຊິກໄອປາ ພົບປະກັບປະເທດສັງເກດການອີກຈຳນວນ 16 ປະເທດ ເພື່ອປຶກສາຫາລືກັນ ໃນການສົ່ງເສີມການຮ່ວມມືລະຫວ່າງໄອປາ ແລະ ບັນດາປະເທດດັ່ງກ່າວ ພາຍໃຕ້ຫົວຂໍ້: “ການສົ່ງເສີມສັນຕິພາບ, ການພັດທະນາແບບຍືນຍົງ ແລະ ການຟື້ນຟູຫລັງການແຜ່ລະບາດຂອງພະຍາດໂຄວິດ-19”

ໃນຕອນທ້າຍຂອງກອງປະຊຸມ, ຫົວໜ້າຄະນະຜູ້ແທນຂອງແຕ່ລະປະເທດສະມາຊິກໄອປາ ໄດ້ຮັບຮອງເອົາບົດລາຍງານຂອງກອງປະຊຸມກຳມາທິການຕ່າງໆ ແລະ ຮ່ວມກັນລົງນາມໃນຖະແຫລງການຮ່ວມກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 43 ພ້ອມທັງເຫັນດີຮັບຮອງເອົາລັດຖະສະພາອິນໂດເນເຊຍ ເປັນປະທານໄອປາ ແລະ ເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 44 ໃນປີ 2023 ທີ່ປະເທດອິນໂດເນເຊຍ.

## ພົບປະ...

(ສພຊ) ໃນວັນທີ 22 ພະຈິກ 2022 ທີ່ພະນົມເປັນ ຣາຊະອະນາຈັກກຳປູເຈຍ ໄດ້ມີການພົບປະສອງຝ່າຍລະຫວ່າງຄະນະຜູ້ແທນສະພາແຫ່ງຊາດ ແຫ່ງ ສປປລາວ ກັບຄະນະຜູ້ແທນລັດຖະສະພາສິງກະໂປ ຝ່າຍລາວນຳໂດຍພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ແລະ ຝ່າຍສິງກະໂປນຳໂດຍພະນະທ່ານ ຕັນ ສວນ ຈິນ (Tan Chuan Jin) ປະທານລັດຖະສະພາ, ຫົວໜ້າຄະນະຜູ້ແທນລັດຖະສະພາສິງກະໂປ, ມີບັນດາທ່ານຄະນະຜູ້ແທນຈາກສະພາສອງປະເທດເຂົ້າຮ່ວມ.

ໃນພິທີພົບປະຄັ້ງນີ້, ພະນະທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ກ່າວສະແດງຄວາມດີໃຈ ທີ່ໄດ້ມີໂອກາດພົບປະເຮັດວຽກຮ່ວມກັບ ພະນະທ່ານ ຕັນ ສວນ ຈິນ ເຊິ່ງເປັນໂອກາດອັນດີທີ່ໄດ້ປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນນຳກັນ ກ່ຽວກັບການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ດີງາມ ລະຫວ່າງ ສອງປະເທດ ກໍຄືລະຫວ່າງ ສອງອົງການນິຕິບັດຍັດຂອງສອງປະເທດ ໃຫ້ເກີດດອກອອກຜົນຍິ່ງໆຂຶ້ນ ແລະ ຕີລາຄາສູງຕໍ່ການພົວພັນຮ່ວມມື ລະຫວ່າງ ສປປລາວ ແລະ ສ.ສິງກະໂປ ມີສາຍພົວພັນມິດຕະພາບ ແລະ ການຮ່ວມມື ທີ່ດີນຳກັນຕະຫລອດມາ ໄດ້ຮັບການພັດທະນາ ແລະ ຂະຫຍາຍຕົວເປັນກ້າວໆ, ເຫັນໄດ້ຈາກສອງປະເທດໄດ້ມີການແລກປ່ຽນການຢ້ຽມຢາມ ຢ່າງເປັນປົກກະຕິ ລະຫວ່າງການນຳຂັ້ນສູງໃນລະດັບຕ່າງໆ ເພື່ອສົ່ງເສີມ ແລະ ຮັດແໜ້ນສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງສອງປະເທດ ເປັນຕົ້ນແມ່ນທາງດ້ານການເມືອງ, ເສດຖະກິດ, ການສຶກສາ ແລະ ອື່ນໆ ເຊິ່ງໄດ້ນຳເອົາຜົນປະໂຫຍດມາໃຫ້ປະຊາຊົນສອງຊາດ; ພ້ອມນັ້ນ, ຍັງໄດ້ແຈ້ງໃຫ້ຮູ້ກ່ຽວກັບກິງຈັກສະພາບການເຄື່ອນໄຫວຂອງສະພາແຫ່ງຊາດແຫ່ງ ສປປລາວ ຊຸດທີ IX, ການຮ່ວມມືຂອງສອງອົງການນິຕິບັນຍັດໂດຍຫຍໍ້ ແລະ ເພື່ອເປັນການສືບຕໍ່ສາຍພົວພັນລະຫວ່າງສອງສະພາ ທ່ານປະທານສະພາແຫ່ງຊາດລາວ ຍັງໄດ້ສະເໜີໃຫ້ມີການແລກປ່ຽນຄະນະຜູ້ແທນໃນລະດັບຕ່າງໆນຳກັນ ເປັນຕົ້ນ ຄະນະປະທານສະພາແຫ່ງຊາດ, ຄະນະປະທານກຳມາທິການ, ຄະນະມິດຕະພາບລາວ-ສິງກະໂປ, ແລະ ຄະນະອື່ນໆ ຢ່າງເປັນປົກກະຕິ; ສະເໜີໃຫ້ການຮ່ວມມືທາງວິຊາການ ໂດຍຮູບການຈັດສຳມະນາ, ເຝິກອົບຮົມ, ທັດສະນະສຶກສາ ແລະ ແລກປ່ຽນບົດຮຽນທີ່ດີຮ່ວມກັນ ເພື່ອຍົກສູງຂີດຄວາມສາມາດໃຫ້ແກ່ພະນັກງານພາຍໃນສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຂອງ ສປປລາວ; ສະເໜີໃຫ້ສອງອົງການນິຕິບັນຍັດຊຸກຍູ້ໃຫ້ສອງລັດຖະບານລາວ-ສິງກະໂປ ເອົາໃຈໃສ່ໃນການຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ ແລະ ນິຕິກຳອື່ນໆ ທີ່ສອງຝ່າຍໄດ້ລົງນາມຮ່ວມກັນໃຫ້ເປັນຮູບປະທຳ ເພື່ອນຳເອົາຜົນປະໂຫຍດມາສູ່ປະຊາຊົນຂອງສອງປະເທດພວກເຮົາ ແລະ ສືບຕໍ່ຮ່ວມມື ແລະ ສະໜັບສະໜູນ ເຊິ່ງກັນ ແລະກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ເພື່ອປະກອບສ່ວນໃນພາລະກິດປົກປັກຮັກສາສັນຕິພາບ, ສະຖຽນລະພາບ, ມິດຕະພາບ ແລະ ການຮ່ວມມື ເພື່ອການພັດທະນາແບບຍືນຍົງ ໃນພາກພື້ນ ແລະ ສາກົນ, ເຊິ່ງໃນປີ 2024 ສະພາແຫ່ງຊາດລາວ ຈະເປັນເຈົ້າພາບຈັດກອງປະຊຸມໃຫຍ່ໄອປາ ຄັ້ງທີ 45 ຫວັງຢ່າງຍິ່ງຈະໄດ້ຮັບການຮ່ວມມື ແລະ ສະໜັບສະໜຸນຈາກລັດຖະສະພາສິງກະໂປ, ພ້ອມນັ້ນ, ທ່ານຍັງໄດ້ເຊື້ອເຊີນທ່ານ ຕັນ ສວນ ຈິນ ຫົວໜ້າຄະນະຜູ້ແທນລັດຖະສະພາສິງກະໂປ ພ້ອມດ້ວຍຄະນະ ມາຢ້ຽມຢາມ ສປປລາວ ຢ່າງເປັນທາງການ ຕາມວັນເວລາທີ່ມີຄວາມສະດວກ.

ໃນໂອກາດນີ້, ພະນະທ່ານ ຕັນ ສວນ ຈິນ ໄດ້ກ່າວສະແດງຄວາມຂອບໃຈ ແລະ ເຫັນດີຕໍ່ຂໍ້ສະເໜີທີ່ຝ່າຍລາວສະເໜີ ເປັນຕົ້ນແມ່ນການຊອກທຶນໃຫ້ພະນັກງານວິຊາການໄປຮຽນພາສາອັງກິດ ໃນການກະກຽມຮັບໃຊ້ກອງປະຊຸມ AIPA ທີ່ ສປປລາວ ຈະເປັນເຈົ້າພາບ ໃນປີ 2024 ນີ້ ແລະ ໄດ້ເຊື້ອເຊີນໃຫ້ຄະນະຜູ້ແທນລາວສືບຕໍ່ຢ້ຽມຢາມ ສ.ສິງກະໂປ ເພື່ອສືບຕໍ່ຮັດແໜ້ນຄວາມສາມັກຄີຮ່ວມມືກັນໃຫ້ດີຍິ່ງຂຶ້ນກວ່າເກົ່າ.

## ເລື່ອງເດັ່ນ, ຂ່າວເດັດ

**# ຄັດໂດຍ: ຫອມສະນິດ**

*❑ ມາຮອດປັດຈຸບັນ, ແຂວງຊຽງຂວາງ ໄດ້ມີຄວາມພ້ອມຮອບດ້ານ ໃນການຈັດງານມະຫະກຳກິລາແຫ່ງຊາດ ຄັ້ງທີ XI ທີ່ຈະຈັດຂຶ້ນໃນລະຫວ່າງວັນທີ 13-22 ທັນວາ 2022 ນີ້, ໂດຍສະເພາະສະໜາມຮັບໃຊ້ການແຂ່ງຂັນແມ່ນມີຄວາມພ້ອມຈັດການແຂ່ງຂັນໄດ້ 100%. ທັງໄດ້ກຳນົດໃຫ້ມີການແຂ່ງຂັນຢູ່ 5 ຈຸດ ຄື: ສະໜາມທົ່ງໄຫຫີນ (ສະໜາມເປີດ-ປິດການແຂ່ງຂັນ), ສະໜາມໄຊຊະນະ, ສະໜາມວິທະຍາໄລຄູຄັງໄຂ, ສະໜາມຮົ່ມສວນມອນ ແລະ ສະໜາມຍິງປືນໂຮງຮຽນນາຍສິບ ປກສ ແຂວງ.*

***ນສພ. ປະເທດລາວ 17/11/2022***

*❑ ຜູ້ປະກອບການທຸລະກິດທ່ອງທ່ຽວລາວຕັ້ງຂໍ້ສົມມຸດໄວ້ຕາມວິໄສທັດເບິ່ງກວ້າງແນມໄກ ແລະ ຄາດຫວັງໄວ້ລ່ວງໜ້າແບບຄ້າວໆ ວ່າຖ້າເມື່ອໃດ ສປຈີນ ເປີດປະເທດພາຍໃນປີ 2023 ບໍ່ພຽງແຕ່ຈະເຮັດໃຫ້ນັກທ່ອງທ່ຽວຊາວຈີນ ຫລັ່ງໄຫລເຂົ້າ ສປປລາວ ເທົ່ານັ້ນ ຫາກນັກທ່ອງທ່ຽວເຫລົ່ານັ້ນຍັງຈະໃຊ້ເສັ້ນທາງລົດໄຟລາວ-ຈີນ ເປັນທາງເຊື່ອມຕໍ່ໄປຍັງບັນດາ 10 ປະເທດສະມາຊິກອາຊຽນຢ່າງໜາແໜ້ນຕາມຂໍ້ມູນຈາກສູນອາຊຽນໃຫ້ຮູ້ວ່າບັນດາແຂວງ, ເຂດແຄວ້ນ ແລະ ຕົວເມືອງຕ່າງໆຂອງ ສປຈີນ ທີ່ມີຊາຍແດນຕິດຈອດ ຫລື ເຊື່ອມຈອດກັບອາຊຽນ ໂດຍຄາດຄະເນວ່າມີປະຊາກອນຫລາຍກວ່າ 300 ລ້ານກວ່າຄົນ ເຊິ່ງເມື່ອຈີນເປີດປະເທດຈະເຮັດໃຫ້ກຸ່ມຄົນເຫລົ່ານັ້ນມີການເຄື່ອນໄຫວເດີນທາງອອກໄປທ່ອງທ່ຽວ, ໄປຕິດຕໍ່ພົວພັນຄ້າຂາຍ ແລະ ເຮັດທຸລະກິດຫລາຍຂຶ້ນ; ຕາມຂໍ້ມູນສະຖິຕິການທ່ອງທ່ຽວ ຈາກະຊວງຖະແຫລງຂ່າວວັດທະນະທຳ ແລະ ທ່ອງທ່ຽວໄດ້ລາຍງານຫວ່າງບໍ່ດົນມານີ້ວ່າ: ຕົວເລກຈຳນວນນັກທ່ອງທ່ຽວເດີນທາງລະຫວ່າງເດືອນມັງກອນ ແລະ ເດືອນກັນຍາເພີ່ມຂຶ້ນຢ່າງຕໍ່ເນື່ອງ; ໃນນັ້ນ, ມີຄົນຕ່າງປະເທດ 644.756 ຄົນ ແລະ ຄົນລາວ 1 ລ້ານກວ່າຄົນ. ສຳລັບຈຳນວນຄົນລາວ ທີ່ເດີນທາງໃນທົ່ວປະເທດເພີ່ມຂຶ້ນ 39% ເມື່ອທຽບກັບ 9 ເດືອນທຳອິດຂອງປີ 2021 ສຳລັບລາຍຮັບທີ່ເກັບກຳໄດ້ຕົວຈິງຈາກນັກທ່ອງທ່ຽວພາຍໃນ 117 ລ້ານໂດລາ ສ່ວນລາຍຮັບເກັບກຳໄດ້ຈາກຈຳນວນນັກທ່ອງທ່ຽວຕ່າງປະເທດ 100 ລ້ານກວ່າໂດລາ.*

***ນສພ.ປະເທດລາວ 24/11/2022***

*❑ ທະນາຄານໂລກ ໄດ້ລາຍງານຄວາມຄືບໜ້າກ່ຽວກັບສະພາບເສດຖະກິດຂອງລາວ ວ່າ: ເຖິງວ່າເສດຖະກິດຂອງລາວຈະມີການຟື້ນຕົວໄລຍະຕົ້ນປີ 2022 ລາວຍັງປະເຊີນກັບບັນຫາ ແລະ ຄວາມທ້າທາຍຫລາຍຂຶ້ນຈາກການອ່ອນຄ່າຂອງເງິນກີບ ແລະ ອັດຕາເງິນເຟີ້ທີ່ສູງ ບົດລາຍງານຕິດຕາມສະພາບເສດຖະກິດ ສະບັບເດືອນຕຸລາ 2022 ການຮັບມືກັບຄວາມບອບບາງດ້ານເສດຖະກິດມະຫາພາກ ໄດ້ລະບຸຂອດການປະຕິຮູບສຳຄັນທີ່ຈະຊ່ວຍປະເທດຟື້ນຟູສະຖຽນລະພາບທາງດ້ານເສດຖະກິດ ແລະ ຮັກສາການເຕີບໂຕທີ່ຍືນຍົງ ບົດລາຍງານຊີ້ແຈງວ່າ: ເງິນກີບໄດ້ອ່ອນຄ່າລົງ 68% ເມື່ອທຽບກັບເງິນໂດລາ ໃນປີນີ້ຈົນມາຮອດເດືອນຕຸລາ ອັນໄດ້ຖ່ວງດຶງການຟື້ນຕົວຂອງເສດຖະກິດ ແລະ ເຮັດໃຫ້ອັດຕາເງິນເຟີ້ຂຶ້ນສູງແລ້ວນຳໄປສູ່ການຫົດຕົວດ້ານການບໍລິໂພກຂອງພາກເອກະຊົນຄົວເຮືອນ ແລະ ການລົງທຶນ ໃນຂະນະດຽວກັນ ຄາດວ່າໜີ້ສິນພາກລັດ ແລະ ໜີ້ສິນທີ່ລັດຄໍ້າປະກັນຈະກາຍ 100% ຂອງ GDP ໃນທ້າຍປີນີ້; ທະນາຄານໂລກ ໄດ້ຫລຸດອັດຕາການເຕີບໂຕຂອງເສດຖະກິດທີ່ຄາດຄະເນໄວ້ສຳລັບລາວລົງມາເປັນ 2,5% ຫລຸດລົງຈາກອັດຕາຄາດຄະເນໃນກ່ອນໜ້ານີ້ຢູ່ທີ່ 3,8% ເຖິງວ່າການຈ້າງງານຈະເພີ່ມຂຶ້ນ ມາຮອດກາງປີ 2022 ແຕ່ລາຍໄດ້ຂອງປະຊາຊົນຍັງເຕີບໂຕຊ້າເມື່ອທຽບກັບອັດຕາເງິນເຟີ້ທີ່ເພີ່ມຂຶ້ນ ອັດຕາເງິນເຟີ້ຂອງໝວດສິນຄ້າບໍລິໂພກປີຕໍ່ປີໄດ້ເພີ່ມຂຶ້ນ 37% ມາຮອດເດືອນຕຸລາ 2022 ໂດຍສະເພາະອັດຕາເງິນເຟີ້ສຳລັບໝວດອາຫານທະລຸເກືອບຮອດ 39% ສົ່ງຜົນກະທົບຢ່າງຫລວງຫລາຍຕໍ່ຜູ້ທຸກຍາກໃນເຂດຕົວເມືອງ ບາງຄອບຄົວຕ້ອງໄດ້ຫລຸດຜ່ອນການບໍລິໂພກສະບຽງອາຫານ ແລະ ການຊົມໃຊ້ນ້ຳມັນເຊື້ອໄຟ ໃນການສຳຫລວດຂອງທະນາຄານໂລກ ໄດ້ມີການລາຍງານວ່າສອງສ່ວນສາມຂອງຄົວເຮືອນໄດ້ຫລຸດຄ່າໃຊ້ຈ່າຍດ້ານສຸຂະພາບ ແລະ ການສຶກສາ ເຊິ່ງອາດມີຜົນກະທົບຕໍ່ການພັດທະນາມະນຸດໃນໄລຍະຍາວ.*

***ນສພ. ວຽງຈັນໃໝ່ 22/11/2022***



## ກອງປະຊຸມ...

ຕັ້ງປະຕິບັດການເຄື່ອນໄຫວວຽກງານປະຈຳປີ 2022 ແລະ ທິດທາງແຜນການປະຈຳປີ 2023 ຂອງຄະນະສະມາຊິກສະແຫ່ງຊາດປະຈຳເຂດເລືອກຕັ້ງໃນການຈັດຕັ້ງປະຕິວຽກງານຕາມ 3 ພາລະບົດບາດຕົ້ນຕໍຄື: ພາລະບົດບາດຮັບຮອງເອົາລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ, ຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ, ທ້ອງຖິ່ນ ແລະ ຕິດຕາມກວດກາ ການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ ຂອງບັນດາອົງການລັດ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ບັນດາມະຕິ, ນິຕິກຳ ທີ່ສະພາແຫ່ງຊາດຮັບຮອງ, ບັນດາໂຄງການທີ່ສະພາແຫ່ງຊາດອະນຸມັດເຄື່ອນໄຫວຈັດຕັ້ງຢູ່ແຂວງໃນໄລຍະຜ່ານມາ; ພ້ອມນັ້ນ, ຍັງໄດ້ຮັບຟັງການຜ່ານຮ່າງມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມກອງປະຊຸມ ໄດ້ພ້ອມກັນຄົ້ນຄວ້າປະກອບຄຳຄິດຄຳເຫັນໃສ່ຮ່າງມະຕິ ແລະ ພິຈາລະນາຢ່າງເລິກເຊິ່ງກ່ຽວກັບສະພາບຕົວຈິງໃນການຈັດຕັ້ງປະຕິບັດໃຫ້ບັນລຸຕາມແຜນການທີ່ວາງໄວ້; ໃນກອງປະຊຸມ, ຄະນະສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ຍັງໄດ້ລົງຄະແນນສຽງຮັບຮອງເອົາຮ່າງມະຕິດ້ວຍຄວາມເປັນເອກະພາບສູງ.

ຕອນທ້າຍຂອງກອງປະຊຸມ, ທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ ໄດ້ມີຄຳເຫັນໂອ້ລົມ ໂດຍທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານ ແລະ ການເຄື່ອນວຽກງານທີ່ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກທີ 12 ແຂວງຄຳມ່ວນ ຍາດໄດ້ຜົນງານອັນພົ້ນເດັ່ນມາຫລາຍດ້ານຕະຫລອດໄລຍະ 1 ປີ ທີ່ຜ່ານມາ ໃນການເປັນອົງການຕົວແທນແຫ່ງສິດ ແລະ ຜົນໂຫຍດຂອງປະຊາຊົນບັນດາເຜົ່າ ກໍຄືພາຍໃນແຂວງຄຳມ່ວນ; ພ້ອມນັ້ນ, ທ່ານຍັງໄດ້ຮຽກຮ້ອງມາຍັງຄະນະ ສສຊ ປະຈຳເຂດເລືອກຕັ້ງ, ຄະນະປະຈຳສະພາປະຊາຊົນແຂວງ, ອົງການປົກຄອງແຂວງ, ອົງການຈັດຕັ້ງທຽບເທົ່າ, ສະມາຊິກສະພາປະຊາຊົນແຂວງ ສືບຕໍ່ເອົາໃຈໃສ່ຄົ້ນຄວ້າ, ກຳແໜ້ນບັນດາເນື້ອໃນ, ທີ່ຕັ້ງພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນໃຫ້ຮັບຮູ້ເຂົ້າໃຈ ເປັນຕົ້ນ: ກຳແໜ້ນເນື້ອໃນຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ບັນດາມະຕິຂອງສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ, ມະຕິຂອງສະພາປະຊາຊົນຂັ້ນແຂວງ ແລະ ມະຕິຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານການເມືອງຂອງຕົນໃຫ້ໜັກແໜ້ນ.

ໃນໂອກາດດັ່ງກ່າວ, ທ່ານ ຮອງປະທານສະພາແຫ່ງຊາດ ໄດ້ມອບເຄື່ອງມືອຸປະກອນສື່ສານທີ່ທັນສະໄໝ (ສະມາດບອດ) ເພື່ອຮັບໃຊ້ໃນການຈັດກອງປະຊຸມທາງໄກໃຫ້ແກ່ວຽກງານຂອງສະພາປະຊາຊົນແຂວງຄຳມ່ວນ.

(ເອື້ອ ມະໂນສິງ )



## ຍົກສູງ...

ຂໍ້ມູນ-ຂ່າວສານ, ວຽກງານຫ້ອງສະໝຸດ, ວຽກງານແກະຄຳເຫັນ ແລະ ການຄົ້ນຄວ້າເອກະສານຢູ່ໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ ໂດຍການເປັນປະທານຂອງທ່ານ ສາຍອູ ພູມສາລີ ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ ເຂົ້າຮ່ວມມີຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ, ຫົວໜ້າ-ຮອງຫົວໜ້າສູນຝຶກອົບຮົມ ແລະ ຂໍ້ສູນຂ່າວສານ, ຫົວໜ້າ-ຮອງຫົວໜ້າພະແນກ, ພະນັກງານ-ວິຊາການຈາກສະພາປະຊາຊົນຂັ້ນແຂວງ 9 ແຂວງ ຄື: ນະຄອນຫລວງວຽງຈັນ, ວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ຈຳປາສັກ, ເຊກອງ ແລະ ອັດຕະປື ເຂົ້າຮ່ວມ.

ຈຸດປະສົງຂອງກອງປະຊຸມກໍເພື່ອຍົກລະດັບຄວາມຮັບຮູ້, ຄວາມເຂົ້າໃຈຂອງພະນັກງານທີ່ເປັນເສນາທິການໃຫ້ແກ່ສະພາປະຊາຊົນຂັ້ນແຂວງ ໂດຍສະເພາະຜູ້ເຂົ້າເຝິກອົບຮົມກ່ຽວກັບວຽກງານການເກັບກຳ ແລະ ສະໜອງຂໍ້ມູນຂ່າວສານ, ວຽກງານຫ້ອງສະໝຸດ, ວຽກງານແກະຄຳເຫັນຂອງສະມາຊິກສະພາແຫ່ງຊາດ ຢູ່ໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ; ເພື່ອເຮັດໃຫ້ຜູ້ເຂົ້າເຝິກອົບຮົມທີ່ມາຈາກສະພາປະຊາຊົນຂັ້ນແຂວງ ສາມາດນຳເອົາບົດຮຽນ ແລະ ຄວາມຮູ້ຈາກການຖ່າຍທອດຂອງວິທະກອນ ແລະ ການແລກປ່ຽນສົນທະນາຈາກກອງປະຊຸມໄປຜັນຂະຫຍາຍເຂົ້າໃນການຈັດຕັ້ງປະຕິບັດວຽກງານຕົວຈິງພາຍໃນແຂວງ ແລະ ວຽກງານທີ່ຕົນເອງຮັບຜິດຊອບຢູ່ໃນສະພາປະຊາຊົນຂັ້ນແຂວງ ໃຫ້ມີການພັດທະນາດີຂຶ້ນ ແລະ ເພື່ອເຮັດໃຫ້ປະຊາຊົນຂັ້ນແຂວງມີຄວາມເຂັ້ມແຂງທາງດ້ານບຸກຄະລາກອນ ແລະ ການຈັດຕັ້ງເຄື່ອນໄຫວວຽກງານວິຊາຄວາມຮູ້ຕາມພາລະບົດບາດມີຄວາມຮັບປະກັນປະສິດທິພາບ, ປະສິດທິຜົນ ແລະ ທັນເວລາ; ນອກຈາກນັ້ນ, ກອງປະຊຸມຍັງໄດ້ສະເໜີບົດຮຽນການແກະຄຳເຫັນຜູ້ແທນກອງປະຊຸມ ແລະ ສ້າງເປັນປຶ້ມປະມວນ; ຄວາມຮູ້ພື້ນຖານກ່ຽວກັບວຽກງານຫ້ອງສະໝຸດ (ການໃຫ້ບໍລິການ, ການຕິດສັນປຶ້ມ, ການເກັບເອກະສານ ແລະ ການຂຶ້ນຂວາຍຊັບພະຍາກອນປຶ້ມ) ແລະ ການເກັບກຳ ແລະ ສະໜອງຂໍ້ມູນຂ່າວສານໃຫ້ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ.

ກອງປະຊຸມຄັ້ງນີ້, ດຳເນີນເປັນເວລາ 2 ວັນ ຈົນເຖິງວັນທີ 24 ພະຈິກ 2022 ຈຶ່ງຈະສຳເລັດ ໂດຍການສະໜັບສະໜູນດ້ານງົບປະມານຈາກທຶນຊ່ວຍເຫລືອລ້າຈາກອົງການຈັດຕັ້ງສາກົນ ແລະ ງົບປະມານສົມທົບຈາກຄະນະເລຂາທິການທິການສະພາແຫ່ງຊາດ.

(ນາງ ກຸກກິກ ບຸດດາໄຊ)

## ຄະນະ...

ປະເທດ, ການຮ່ວມມືສາກົນ, ຂໍ້ມູນຂ່າວສານ ແລະ ສື່ມວນຊົນ, ສະພາສູງແຫ່ງ ຣາຊະອານາຈັກກຳປູເຈຍ ມີບັນດາທ່ານຄະນະຜູ້ແທນຈາກປະເທດສະມາຊິກອາຊຽນເຂົ້າຮ່ວມ.

ໂອກາດດັ່ງກ່າວ, ຄະນະຜູ້ແທນລາວ ໄດ້ປະກອບຄຳເຫັນໃສ່ບັນດາຮ່າງມະຕິກອງປະຊຸມກຳມາທິການວຽກງານພາຍໃນ ເປັນຕົ້ນແມ່ນ: ຮ່າງມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການເງິນ ສົກປີ 2021-2022; ຮ່າງມະຕິວ່າດ້ວຍການຮັບຮອງເອົາຄາດຄະເນງົບປະມານ ສົກປີ 2022-2023; ຮ່າງມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງກອງເລຂາປະຈຳປີ 2021-2022; ຮ່າງມະຕິວ່າດ້ວຍການຮັບຮອງເອົາລັດຖະສະພາສະຫະລັດອາເມລິກາ ກັບເຂົ້າເປັນຜູ້ສັງເກດການຂອງ AIPA; ຮ່າງມະຕິວ່າດ້ວຍການຮັບຮອງເອົາການຕໍ່ອາຍຸ ແລະ ປັບປຸງບົດບັນທຶກຄວາມເຂົ້າໃຈລະຫວ່າງ AIPA ແລະ ສະຖາບັນຄົ້ນຄວ້າເສດຖະກິດອາຊຽນ ແລະ ອາຊີຕາເວັນອອກ (ERIA) ເພື່ອພັດທະນາຂີດຄວາມສາມາດຂອງໄອປາ ຕໍ່ກັບປະຊາຄົມເສດຖະກິດອາຊຽນ ແລະ ການເຊື່ອມໂຍງເສດຖະກິດອາຊຽນໃນດ້ານຕ່າງໆ; ຮ່າງມະຕິວ່າດ້ວຍການຮັບຮອງເອົາການຕໍ່ອາຍຸ ແລະ ປັບປຸງບົດບັນທຶກຄວາມເຂົ້າໃຈລະຫວ່າງກອງເລຂາໄອປາ ແລະ ມູນລະນິທິຟົນແລນ; ຮ່າງມະຕິວ່າດ້ວຍການຮັບຮອງເອົາການຕໍ່ອາຍຸ ແລະ ປັບປຸງບົດບັນທຶກຄວາມເຂົ້າໃຈ ລະຫວ່າງ AIPA ແລະ ສູນກາງລັດຖະສະພາອາຊີ (PCAsia) ກ່ຽວກັບ "ໂຄງການພັດທະນາຂີດຄວາມສາມາດຂອງພະນັກງານລັດຖະສະພາສະມາຊິກ AIPA; ຮ່າງມະຕິວ່າດ້ວຍການຮັບຮອງເອົາການສ້າງຄະນະປຶກສາຫາລືປະຈຳປີ ຮ່ວມກັນຂອງ AIPA ແລະ PCAsia ເພື່ອສົ່ງເສີມຂໍ້ມູນທີ່ໂປ່ງໃສ ແລະ ການແບ່ງປັນຄວາມຮູ້ ໃນການກຽມຄວາມພ້ອມ ແລະ ຮັບມືກັບເຫດສຸກເສີນທາງດ້ານສຸຂະພາບ; ຮ່າງມະຕິວ່າດ້ວຍການຮັບຮອງເອົາການສ້າງຕັ້ງຫ້ອງສະໝຸດກົດໝາຍດິຈິຕອນ; ຮ່າງມະຕິວ່າດ້ວຍການຮັບຮອງເອົາການມອບລາງວັນກຽດຕິຄຸນໄອປາ ໃຫ້ແກ່ຜູ້ທີ່ມີຜົນງານດີເດັ່ນໃນການເຄື່ອນໄຫວວຽກງານໄອປາ: ທ່ານ Pehin Orang Kaya Seri Lela Dato Seri Setia Awang Haji Abdul Rahman bin Dato Setia Haji Mohammad Taib, ປະທານສະພານິຕິບັນຍັດແຫ່ງບຣູໄນ; ຮ່າງມະຕິວ່າດ້ວຍການຮັບຮອງເອົາການມອບລາງວັນກຽດຕິຄຸນໄອປາ ໃຫ້ແກ່ຜູ້ທີ່ມີຜົນງານດີເດັ່ນໃນການເຄື່ອນໄຫວວຽກງານໄອປາ: ທ່ານ ນາງ Kittisangahakbindit Khuon Sudary ຮອງປະທານສະພາແຫ່ງຊາດ ຜູ້ທີສອງ ຂອງກຳປູເຈຍ ແລະ ປະທານ WAIPA; ຮ່າງມະຕິວ່າດ້ວຍການຮັບຮອງເອົາການມອບລາງວັນກຽດຕິຄຸນໄອປາ ໃຫ້ແກ່ຜູ້ທີ່ມີຜົນງານດີເດັ່ນໃນການເຄື່ອນໄຫວວຽກງານໄອປາ: ທ່ານ ນາງ Rose Marie J, Arenas ອາດີດປະທານສະພາແຫ່ງຊາດ ຟີລິບປິນ; ຮ່າງມະຕິວ່າດ້ວຍການຮັບຮອງເອົາການຊົມເຊີຍຕໍ່ການສຳເລັດໜ້າທີ່ການເປັນປະທານໄອປາ ຂອງ ພະນະທ່ານ Samdech Akka Moha Ponhea Chakrei Heng Samrin; ຮ່າງມະຕິວ່າດ້ວຍການຮັບຮອງເອົາການຕໍ່ອາຍຸສັນຍາການເຮັດວຽກຂອງເລຂາທິການໃຫຍ່ໄອປາ ຈຳນວນ 3 ເດືອນ ແຕ່ເດືອນຕຸລາ ຫາ ເດືອນທັນວາ 2022; ຮ່າງມະຕິວ່າດ້ວຍການຮັບຮອງເອົາການຊົມເຊີຍຕໍ່ການສຳເລັດໜ້າທີ່ການເປັນເລຂາທິການໃຫຍ່ໄອປາຄົນທີ 5 ຂອງທ່ານ ນາງ Nguyen Tuong Van; ຮ່າງມະຕິວ່າດ້ວຍການຮັບຮອງເອົາການແຕ່ງຕັ້ງເລຂາທິການໃຫຍ່ໄອປາ ຄົນທີ 6 ແລະ ຮ່າງມະຕິວ່າດ້ວຍການຮັບຮອງເອົາວັນ, ເວລາ ແລະ ສະຖານທີ່ຈັດກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 44.

## ຮອງປະທານ...

ມືລະຫວ່າງສະພາແຫ່ງຊາດລາວ ແລະ ສະຖານເອກອັກຄະລັດຖະທູດ ແຫ່ງ ສ.ເກົາຫລີ ປະຈຳ ສປປລາວ.

ໃນໂອກາດນີ້, ທ່ານຮອງປະທານສະພາແຫ່ງຊາດ ໄດ້ສະແດງຄວາມຍິນດີຕ້ອນຮັບທ່ານ ຈອງ ຢອງ ຊູ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສ.ເກົາຫລີ ປະຈຳ ສປປລາວ ແລະ ຊົມເຊີຍ ທ່ານທີ່ໄດ້ຮັບການແຕ່ງຕັ້ງມາປະຕິບັດໜ້າທີ່ການທູດ ຢູ່ ສປປລາວ ແລະ ອວຍພອນໃຫ້ທ່ານປະສົບຜົນສຳເລັດ ໃນການປະຕິບັດໜ້າທີ່ວຽກງານການທູດຂອງທ່ານ ຢູ່ ສປປລາວ ເຊິ່ງເປັນການປະກອບສ່ວນເພີ່ມພູນຄູນສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງ ສປປລາວ ແລະ ສ.ເກົາຫລີ, ລະຫວ່າງ 2 ອົງການນິຕິບັນຍັດຂອງ 2 ປະເທດ ໃຫ້ນັບມື້ນັບຂະຫຍາຍຕົວຍິ່ງຂຶ້ນ.

ຕະຫລອດໄລຍະຜ່ານມາ, ການພົວພັນຮ່ວມມື ລະຫວ່າງ ສອງປະເທດ ໄດ້ຮັບການເສີມຂະຫຍາຍເປັນກ້າວໆ ເຊິ່ງສະແດງອອກດ້ວຍການແລກປ່ຽນຄະນະຜູ້ແທນໄປ-ມາຫາສູ່ກັນໃນຫລາຍຂັ້ນ-ຫລາຍລະດັບ ແລະ ຮ່ວມມືໃນຂະແໜງການຕ່າງໆ ເປັນຕົ້ນແມ່ນການຮ່ວມມືດ້ານການພັດທະນາເສດຖະກິດ-ສັງຄົມ, ການສຶກສາ, ກະສິກຳ, ການທ່ອງທ່ຽວ, ແຮງງານ, ການຄ້າ-ການລົງທຶນ ແລະ ຂະແໜງການອື່ນໆ, ສອງຝ່າຍຍັງໄດ້ມີການຮ່ວມມື ແລະ ສະໜັບສະໜູນເຊິ່ງກັນ ແລະກັນ ໃນເວທີພາກພື້ນ ແລະ ສາກົນ; ສຳລັບການພົວພັນຮ່ວມມື ລະຫວ່າງ ສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດ ແຫ່ງ ສ.ເກົາຫລີ ກໍໄດ້ຮັບການເສີມຂະຫຍາຍດີຂຶ້ນຢ່າງຕໍ່ເນື່ອງ, ການແລກປ່ຽນຢ້ຽມຢາມຄະນະຜູ້ແທນລະດັບສູງຂອງສອງສະພາ, ລະດັບຂັ້ນກຳມາທິການ, ຄະນະເລຂາທິການ ແລະ ຄະນະມິດຕະພາບລັດຖະສະພາລາວ-ສ.ເກົາຫລີ-ລາວ ເປັນຕົ້ນແມ່ນທ່ານ ຈອງ ອຸຍ ຮົວ ປະທານສະພາແຫ່ງຊາດ ສ.ເກົາຫລີ ເຄີຍໄດ້ມາຢ້ຽມຢາມ ສປປລາວ ໃນປີ 2015; ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ແລະ ທ່ານ ປາກ ບຽວ ຊົງ ປະທານສະພາແຫ່ງຊາດ ສ.ເກົາຫລີ ກໍໄດ້ພົບປະຜ່ານວິດີໂອທາງໄປນຳກັນໃນປີນີ້. ນອກນີ້, ສອງສະພາແຫ່ງຊາດ ກໍໄດ້ມີການສະໜັບສະໜູນກັນ ເຊິ່ງກັນແລະກັນ ໃນເວທີພາກພື້ນ ແລະ ສາກົນ ເປັນຕົ້ນແມ່ນໃນເວທີຂອງ IPU, ASEP, APPF, AIPA ແລະ ເວທີອື່ນໆ ເພື່ອປະກອບສ່ວນໃນການສົ່ງເສີມສັນຕິພາບ, ສະຖຽນລະພາບ, ມິດຕະພາບ ແລະ ການຮ່ວມມື ເພື່ອການພັດທະນາ ໃນພາກພື້ນ ແລະ ໃນໂລກ.

ທ່ານຮອງປະທານສະພາແຫ່ງຊາດລາວ ຍັງໄດ້ແຈ້ງສະພາບຫຍໍ້ຂອງ ສປປລາວ ໃນປະຈຸບັນ ກໍຄືສະພາບການເຄື່ອນໄຫວຂອງສະພາແຫ່ງຊາດລາວ ຊຸດທີ IX ເຊິ່ງມີສະມາຊິກສະພາແຫ່ງຊາດທັງໝົດ 164 ທ່ານ, ຍິງ 36 ທ່ານ ກວມເອົາ 21,95% ຂອງຈຳນວນສະມາຊິກສະພາແຫ່ງຊາດທັງໝົດ; ສະພາປະຊາຊົນແຂວງ ຊຸດທີ II ມີສະມາຊິກທັງໝົດ 492 ທ່ານ, ຍິງ 150 ທ່ານ ກວມເອົາ 30,48% ຂອງຈຳນວນສະມາຊິກສະພາປະຊາຊົນແຂວງທັງໝົດ; ສະພາແຫ່ງຊາດໄດ້ມີການຈັດຕັ້ງດຳເນີນກອງປະຊຸມມາແລ້ວ 3 ຄັ້ງ ແລະ ປະຈຸບັນພວມກະກຽມໃສ່ກອງປະຊຸມສະໄໝສາມັນຄັ້ງທີ 4 ທີ່ຈະໄດ້ຈັດຂຶ້ນໃນມໍ່ໆນີ້.

ຈາກນັ້ນ, ທ່ານທູດ ສ.ເກົາຫລີ ຄົນໃໝ່ ໄດ້ສະແດງຄວາມດີໃຈທີ່ໄດ້ມີໂອກາດມາຢ້ຽມຂໍ່ານັບທ່ານຮອງປະທານສະພາແຫ່ງຊາດ ໃນຄັ້ງນີ້ ເຊິ່ງທ່ານໄດ້ສະແດງຄວາມປິຕິຍິນດີທີ່ໄດ້ມາປະຕິບັດໜ້າທີ່ຢູ່ ສປປລາວ ພ້ອມທັງໄດ້ຕີລາຄາສູງຕໍ່ຜົນການພົວພັນຮ່ວມມືລະຫວ່າງ 2 ຝ່າຍໃນໄລຍະຜ່ານມາ ແລະ ເນັ້ນເຖິງຄວາມສຳຄັນໃນການຈະສືບຕໍ່ຮ່ວມມືໃນຕໍ່ໜ້າ ໂດຍສະເພາະໃນດ້ານເສດຖະກິດ-ການລົງທຶນ, ແຮງງານ, ການສືບຕໍ່ແລກປ່ຽນການຢ້ຽມຢາມຂອງການນຳຂັ້ນສູງຂອງ 2 ປະເທດ ແລະ ຂອງ 2 ສະພາແຫ່ງຊາດ ແລະ ການຮ່ວມມືໃນຂົງເຂດຕ່າງໆ ທີ່ເຫັນວ່າ 2 ຝ່າຍມີຄວາມສົນໃຈນຳກັນ.

ໃນຕອນທ້າຍ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ຕາງໜ້າສະພາແຫ່ງຊາດ ແລະ ປະຊາຊົນລາວ ບັນດາເຜົ່າສະແດງຄວາມຂອບໃຈຢ່າງຈິງໃຈ ຕໍ່ລັດຖະບານ ແລະ ປະຊາຊົນ ສ.ເກົາຫລີ ທີ່ໄດ້ໃຫ້ການຊ່ວຍເຫລືອອັນລ້ຳຄ່າ ທັງໃນຂອບສອງຝ່າຍ ແລະ ຫລາຍຝ່າຍ ແກ່ ສປປລາວ; ໃນໄລຍະຜ່ານມາ, ສ.ເກົາຫລີ ຈັດຢູ່ໃນອັນດັບຕົ້ນໆຂອງປະເທດທີ່ໃຫ້ການຊ່ວຍເຫລືອເພື່ອການພັດທະນາ (ODA) ແລະ ການລົງທຶນໃນ ສປປລາວ; ພ້ອມນັ້ນ, ໄດ້ອວຍພອນໃຫ້ທ່ານທູດຈົ່ງປະສົບຜົນສຳເລັດຢ່າງຈົບງາມ ໃນການປະຕິບັດໜ້າທີ່ການທູດຂອງຕົນຢູ່ ສປປລາວ.

(ນາງ ສຸພາວັນ ຫອມສະນິດ)

## ກອງປະຊຸມປະຈຳປີ 2022 ຂອງຄະນະເລຂາທິການ ສພຂ ສາລະວັນ




(ສພຊ) ກອງປະຊຸມສະຫລຸບປະຈຳປີ 2022 ຂອງຄະນະເລຂາທິການສະພາປະຊາຊົນແຂວງ (ສພຂ) ສາລະວັນ ໄຂຂຶ້ນຢ່າງເປັນທາງການ ດ້ວຍຮູບແບບກອງປະຊຸມເຊິ່ງໜ້າ ແລະ ຮູບແບບທາງໄກ; ໃນຕອນເຊົ້າຂອງວັນທີ 22 ພະຈິກ 2022 ຢູ່ທີ່ຫ້ອງປະຊຸມ ສພຂ ສາລະວັນ ໂດຍການເປັນປະທານກອງປະຊຸມຂອງທ່ານ ສົມພອນ ແສງສຸລິຈັນ ຄະນະປະຈຳເລຂາທິການ ສພຂ; ເຂົ້າຮ່ວມມີຄະນະກຳມະການ, ຄະນະເລຂາທິການ, ບັນດາທ່ານສະມາຊິກສະພາປະຊາຊົນແຂວງ (ສສຂ) ອ້ອມຂ້າງແຂວງ ແລະ ປະຈຳເຂດເລືອກຕັ້ງປະຈຳເມືອງທົ່ວແຂວງ ເຂົ້າຮ່ວມຮູບແບບວິດີໂອທາງໄກ ຕະຫລອດຮອດພະນັກງານ-ລັດຖະກອນພາຍໃນ ສພຂ ເຂົ້າຮ່ວມໃນຄັ້ງນີ້.

ກອງປະຊຸມໄດ້ຮັບຟັງການຜ່ານຮ່າງບົດສະຫລຸບຕີລາຄາການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ຂອງຄະນະເລຂາທິການ ສພຂ ຜ່ານໂດຍທ່ານ ສະນັ່ນ ພົມພິສານ ຮອງເລຂາທິການ ສພຂ ໃຫ້ຮູ້ວ່າ: ຕະຫລອດໄລຍະ 1 ປີຜ່ານມາ ຄລສຂ ໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ສະມາຊິກພັກ ພະນັກງານ-ລັດຖະກອນ ດ້ວຍຫລາຍຮູບການ ເຮັດໃຫ້ພະນັກງານ-ລັດຖະກອນ ມີຄວາມເຂົ້າໃຈຢ່າງເລິກເຊິ່ງ ແລະ ເຊື່ອໝັ້ນຕໍ່ການນຳພາຂອງພັກ, ມີທັດສະນະຫລັກໝັ້ນການເມືອງໜັກແໜ້ນ ມີຄວາມອຸ່ນອ່ຽງ, ທຸ້ມທ່ຽງ ເອົາໃຈໃສ່ປະຕິບັດໜ້າທີ່ຂອງຕົນ ດ້ວຍຄວາມຮັບຜິດຊອບສູງ ແລະ ເຮັດໃຫ້ວຽກງານມີປະສິດທິຜົນ ແລະ ປະສິດທິພາບສູງ; ສຳລັບວຽກງານວິຊາສະເພາະ: ໄດ້ເອົາໃຈໃສ່ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຮັບໃຊ້ກອງປະຊຸມຮ່ວມລະຫວ່າງ ສພຂ ແລະ ອົງການປົກຄອງແຂວງ ຈຳນວນ 2 ຄັ້ງ; ຮັບໃຊ້ກອງປະຊຸມສະໄໝສາມັນ 2, 3 ຂອງ ສພຂ ໃນນັ້ນໄດ້ສັງລວມການຊັກຖາມຂອງ ສສຂ ທີ່ໄດ້ຊັກຖາມໃນກອງປະຊຸມສະໄໝສາມັນ 2, 3 ມີຈຳນວນ 61 ເທື່ອຄົນ ມີ 67 ຄັ້ງ ແລະ ພະແນກການອົງການຂຶ້ນຊີ້ແຈງ 17 ພາກສ່ວນ; ສັງລວມບັນດາມະຕິກອງປະຊຸມສະໄໝສາມັນ ຈຳນວນ 15 ສະບັບ, ໄດ້ປະສານສົມທົບກັບຂະແໜງການກ່ຽວຂ້ອງຂອງ ສພຂ ໃນການແກ້ໄຂເນື້ອໃນໂທລະສັບສາຍດ່ວນກອງປະຊຸມສະໄໝສາມັນ ທີ່ສະພາແຫ່ງຊາດ (ສພຊ) ສົ່ງເຖິງ ສພຂ ມີ 6 ສາຍ, 6 ຄຳສະເໜີ ຕໍ່ກັບຄຳສະເໜີໄດ້ອອກແຈ້ງການໃຫ້ພາກສ່ວນກ່ຽວຂ້ອງນຳໄປຄົ້ນຄວ້າແກ້ໄຂໄດ້ສຳເລັດ; ໄດ້ອຳນວຍຄວາມສະດວກໃຫ້ຄະນະປະຈຳສະພາປະຊາຊົນແຂວງ ຈັດກອງປະຊຸມທາບທາມຮ່າງກົດໝາຍທີ່ ສພຊ ສົ່ງໃຫ້ 3 ຄັ້ງ, ຈຳນວນ 9 ສະບັບ ແລະ ເຂົ້າຮ່ວມທາບທາມຮ່າງກົດໝາຍທັງພາຍໃນ ແລະ ຕ່າງແຂວງ; ເປັນເສນາທິການສັງລວມເນື້ອໃນຮັບຮອງເອົາບັນຫາສຳຄັນຂອງແຂວງ ອອກເປັນມະຕິກອງປະຊຸມຂອງຄະນະເລຂາທິການ ສພຂ ຈຳນວນ 9 ສະບັບ ແລະ ນອກນັ້ນຍັງໄດ້ເອົາໃຈໃສ່ວຽກງານຈັດຕັ້ງ-ພະນັກງານ, ວຽກງານກວດກາ, ວຽກນະໂຍບາຍ, ວຽກສື່ມວນຊົນ, ໄອທີ, ວຽກງານການຕ່າງປະເທດ ແລະ ວຽກງານອື່ນໆ.

ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມກອງປະຊຸມ ໄດ້ພ້ອມກັນຄົ້ນຄວ້າປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ ບົນພື້ນຖານຄວາມຮັບຜິດຊອບເຂົ້າໃສ່ຮ່າງບົດສະຫລຸບຕີລາຄາການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ຂອງ ຄລສຂ ທັງນີ້ເພື່ອແນ່ໃສ່ໃຫ້ເນື້ອໃນມີຄວາມຖືກຕ້ອງຄົບຖ້ວນ, ເໝາະສົມ ທັງເຮັດໃຫ້ວຽກງານການເປັນເສນາທິການໃຫ້ແກ່ ສພຂ ໃຫ້ມີຄວາມແທດເໝາະກົມກຽວ ແລະ ເປັນຈະບ່ອນອີງໃຫ້ແກ່ ຄລສຂ ສືບຕໍ່ການຈັດຕັ້ງປະຕິບັດໜ້າທີ່ວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ ເປັນໄປຕາມແຜນການທີ່ວາງໄວ້ ໃຫ້ມີຜົນສຳເລັດຕາມລະດັບຄາດໝາຍ.

ຕອນທ້າຍ, ທ່ານ ສົມພອນ ແສງສຸລິຈັນ ໄດ້ໂອ້ລົມ ແລະ ຊີ້ນຳ ຕໍ່ວຽກງານຂອງ ຄລສຂ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍ ແລະ ຊົມເຊີຍຢ່າງສຸດໃຈ ຕໍ່ໝາກຜົນງານຫລາຍດ້ານ ທີ່ຄະນະເລຂາທິການ ສພຂ ສາມາດຍາດມາໄດ້ໄລຍະໜຶ່ງປີຜ່ານມາ; ຕໍ່ຜົນສຳເລັດດັ່ງກ່າວ ຍັງມີວຽກງານທີ່ສຳຄັນທີ່ຕ້ອງສືບຕໍ່ຄົ້ນຄວ້າຫັນເອົາມະຕິຂອງ ສພຂ, ຄຈສຂ ມາເປັນແຜນການ, ໂຄງການ ແລະ ກິດຈະກຳລະອຽດ ເພື່ອຈັດຕັ້ງປະຕິບັດເປັນແຕ່ລະໄລຍະ ເຮັດໃຫ້ການເຄື່ອນໄຫວວຽກງານຂອງຄະນະເລຂາທິການ ສພຂ ໃນປີ 2023 ບັນລຸຕາມລະດັບຄາດໝາຍ ແລະ ທ່ານຍັງໄດ້ຮຽກຮ້ອງໃຫ້ຜູ້ເຂົ້າຮ່ວມກອງປະຊຸມຄັ້ງນີ້ ຈົ່ງນຳເອົາເນື້ອໃນຈິດໃຈຂອງກອງປະຊຸມນຳໄປຈັດຕັ້ງຜັນຂະຫຍາຍ ໃຫ້ເປັນແຜນການອັນລະອຽດ ເພື່ອຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ.

(ດີລຳພົນ ພົມມະຈັນ)

## ຮັບຟັງການລາຍງານວຽກງານພົ້ນເດັ່ນຂອງ 2 ຂົງເຂດ



(ສພຊ) ລະຫວ່າງວັນທີ 10-11 ພະຈິກ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ ໄດ້ສຳເລັດກອງປະຊຸມລາຍງານວຽກງານພົ້ນເດັ່ນໃນໄລຍະໜຶ່ງປີຜ່ານມາ 2 ຂົງເຂດຄື: ຂົງເຂດຍຸຕິທຳ ແລະ ປກຊ-ປກສ ແລະ ຂົງເຂດທະນະທຳ-ສັງຄົມ ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ປະທານສະພາປະຊາຊົນແຂວງ, ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການ-ອົງການ, ຕາງໜ້າພາກສ່ວນທີ່ກ່ຽວຂ້ອງ ແລະ ພະນັກງານຂະແໜງຊ່ວຍວຽກສະພາປະຊາຊົນແຂວງ ເຂົ້າຮ່ວມ.

ການຈັດກອງປະຊຸມໃນຄັ້ງນີ້, ເພື່ອສະຫລຸບລາຍງານວຽກພົ້ນເດັ່ນ, ມີຂໍ້ສະດວກ-ຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາຕາມຄຳຖາມເຈາະຈີ້ມຂອງສະພາປະຊາຊົນແຂວງ ແລະ ມີຄຳສະເໜີ ເພື່ອເປັນການແລກປ່ຽນຄຳຄິດເຫັນ ທັງເປັນການສະໜອງຂໍ້ມູນໃຫ້ແກ່ສະມາຊິກສະພາແຫ່ງຊາດ ທີ່ຈະເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະໄຂຂຶ້ນໃນເດືອນທັນວາ 2022.

ກອງປະຊຸມໄດ້ຮັບຟັງການລາຍງານ ແລະ ປະກອບຄຳຄິດຄຳເຫັນແລກປ່ຽນເຊິ່ງກັນ ແລະກັນ ໃນຂົງເຂດຍຸຕິທຳ ແລະ ປກຊ-ປກສ ປະກອບມີ: ອົງການໄອຍະການປະຊາຊົນແຂວງ; ສານປະຊາຊົນແຂວງ; ພະແນກຍຸຕິທຳ, ປກຊ-ປກສ ແລະ ຂົງເຂດວັດທະນະທຳ-ສັງຄົມ ຄື: ພະແນກສຶກສາທິການ ແລະ ກິລາ; ພະແນກແຮງງານ ແລະ ສະຫວັດດີການສັງຄົມ; ພະແນກສາທາລະນະສຸກ ແລະ ພະແນກຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ໃນຕອນທ້າຍ, ປະທານກອງປະຊຸມໄດ້ມີຄຳເຫັນເພີ່ມຕື່ມຕໍ່ບັນດາພະແນກການ-ອົງການ, ອົງການ, 2 ກຳລັງ ແລະ ຄະນະຮັບຜິດຊອບ ຈົ່ງຮີບຮ້ອນສັງລວມບັນດາເນື້ອໃນ, ບັນດາຄຳສະເໜີຕ່າງໆ, ປັບປຸງ ແລະ ສິ່ງບົດລາຍງານດັ່ງກ່າວ ໃຫ້ຄະນະປະຈຳສະພາປະຊາຊົນແຂວງ.

(ນັກຂ່າວ ສພຂ ອຸດົມໄຊ)

## ເຜີຍແຜ່ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການປະຢັດ ແລະ ຕ້ານການຟູມເຟືອຍ




(ສພຊ) ຕອນເຊົ້າຂອງວັນອັງຄານທີ 15 ພະຈິກ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ ໄດ້ຈັດຕັ້ງເຜີຍແຜ່ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການປະຢັດ ແລະ ຕ້ານການຟູມເຟືອຍ ໂດຍການເປັນປະທານຂອງທ່ານ ຄຳເພີຍ ງອນວັນຄຳ ຮອງປະທານສະພາປະຊາຊົນແຂວງ, ມີທ່ານ ນາງ ຄຳພອນ ພົມມະຈັນ ຮອງປະທານສະພາປະຊາຊົນແຂວງ, ບັນດາທ່ານຄະນະປະຈຳ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານວິຊາການພາຍໃນສະພາປະຊາຊົນແຂວງ ເຂົ້າຮ່ວມຢ່າງພ້ອມພຽງ.

ເອກະສານທີ່ນຳມາເຜີຍແຜ່ຄັ້ງນີ້ປະກອບມີ: ຄຳສັ່ງຂອງທ່ານເຈົ້າແຂວງ ສະບັບເລກທີ 999/ອຊ, ລົງວັນທີ 10 ຕຸລາ 2022 ວ່າດ້ວຍການເພີ່ມທະວີຈັດຕັ້ງປະຕິບັດຄຸ້ມຄອງພະນັກງານ-ລັດຖະກອນ ແລະ ກຳລັງປະກອບອາວຸດຢູ່ແຂວງອຸດົມໄຊ, ຂໍ້ຕົກລົງຂອງທ່ານເຈົ້າແຂວງ ສະບັບເລກທີ 1032/ອຊ, ລົງວັນທີ 24 ຕຸລາ 2022 ວ່າດ້ວຍການປະຢັດ ແລະ ຕ້ານການຟູມເຟືອຍ ສະເໜີໂດຍທ່ານ ຄຳເພີຍ ງອນວັນຄຳ ແລະ ໄດ້ຮັບຟັງການເຜີຍແຜ່ຂໍ້ຕົກລົງວ່າດ້ວຍການປະສານງານລະຫວ່າງຫ້ອງວ່າການແຂວງ, ບັນດາພະແນກການ, ອົງການທຽບເທົ່າຂັ້ນແຂວງ ແລະ ເມືອງ, ດຳລັດວ່າດ້ວຍຈັນຍາບັນຂອງພະນັກງານ-ລັດຖະກອນ ສະບັບເລກທີ 184/ລບ, ລົງວັນທີ 26 ມິຖຸນາ 2022 ສະເໜີໂດຍທ່ານ ນາງ ວັນສີ ພວງມະໄລ ເລຂາທິການສະພາປະຊາຊົນແຂວງ.

ຈຸດປະສົງກໍແມ່ນເພື່ອເປັນການຜັນຂະຫຍາຍບັນດາດຳລັດ, ຄຳສັ່ງ, ຂໍ້ຕົກລົງ ແລະ ເອກະສານຕ່າງໆ ໃຫ້ພະນັກງານ-ລັດຖະກອນ ຮັບຮູ້ ແລະ ເຂົ້າໃຈກ່ຽວກັບບັນດາຄາດໝາຍ, ເປົ້າໝາຍ, ຂອບເຂດການນຳໃຊ້, ຂໍ້ຫ້າມ ແລະ ມາດຕະການໃນການປະຕິບັດໃນອົງການຈັດຕັ້ງລັດ ທີ່ນຳໃຊ້ງົບປະມານຂອງລັດໃຫ້ມີປະສິດທິຜົນສູງ ແລະ ເປັນການປູກຈິດສຳນຶກ ປະຕິບັດການປະຢັດ ແລະ ຕ້ານການຟູມເຟືອຍໃນການສ້າງແຜນ, ການປະຕິບັດລາຍຈ່າຍງົບປະມານ, ປະຢັດຊັບສິນ, ປະຢັດພະລັງງານ, ປະຢັດແຮງງານ, ປະຢັດເວລາ ແລະ ອື່ນໆ ເພື່ອຫລີກລ່ຽງການໃຊ້ຈ່າຍ ແລະ ນຳໃຊ້ທີ່ບໍ່ມີເຫດຜົນ, ບໍ່ສ້າງຜົນປະໂຫຍດຕອບແທນໃຫ້ລັດ ແລະ ສັງຄົມ.

(ແສງພອນ ອິນນະລົງ)

## ຄສຜງ ຢ້ຽມຢາມ ແລະ ຊຸກຍູ້ກິດຈະການກະສິກຳ



(ສພຊ) ໃນວັນທີ 18 ພະຈິກ 2022 ທ່ານ ສຸກສຳລານ ໄຊຍະແສງ ຮອງປະທານສະພາປະຊາຊົນແຂວງອັດຕະປື, ປະທານຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ (ຄສຜງ) ພ້ອມດ້ວຍຄະນະ ໄດ້ສົມທົບກັບຜູ້ຕາງໜ້າຈາກພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ເຄື່ອນໄຫວຢ້ຽມຢາມ ແລະ ຊຸກຍູ້ບໍລິສັດ ຂັນໄຊ ພັດທະນາກະສິກຳ ຈຳກັດ.

ໃນໂອກາດນີ້, ຜູ້ອຳນວຍການ ບໍລິສັດ ຂັນໄຊພັດທະນາກະສິກຳ ຈຳກັດ ໄດ້ລາຍງານໂດຍຫຍໍ້ວ່າ: ບໍລິສັດສ້າງຕັ້ງຂຶ້ນໃນປີ 2012 ແຕ່ກ່ອນຂຶ້ນກັບກຸ່ມບໍລິສັດ ຮ່ວາງແອງຢະຣາຍ (ປູກຢາງພາລາ). ຈາກນັ້ນ, ໄດ້ຫັນປ່ຽນມາປູກຕົ້ນໄມ້ໃຫ້ໝາກ ມີເນື້ອທີ່ 1000 ກວ່າເຮັກຕາ ກິດຈະການຫລັກໆ ແມ່ນປູກຕົ້ນໄມ້ໃຫ້ໝາກ (ຕົ້ນກ້ວຍ) ແລະ ລ້ຽງສັດ (ງົວ, ໝູ, ໄກ່), ມີແຮງງານ 900 ກວ່າຄົນ, ສາມາດເຮັດໃຫ້ປະຊາຊົນອ້ອມຂ້າງມີວຽກເຮັດງານທຳ ແລະ ໄລຍະຜ່ານມາຜົນລາຍຮັບສົ່ງອອກຍັງໄດ້ຫລາຍພໍສົມຄວນ ແລະ ບໍລິສັດຍັງໄດ້ຍົກໃຫ້ເຫັນຂໍ້ຫຍຸ້ງຍາກ, ຂໍ້ຄົງຄ້າງ ແລະ ບາງຄຳສະເໜີຕໍ່ ຄສຜງ. ຈາກນັ້ນ, ປະທານ ຄສຜງ ຍັງໄດ້ສະແດງຄວາມຍ້ອງຍໍຊົມເຊີຍທີ່ສາມາດຍາດໄດ້ຜົນສຳເລັດຫລາຍດ້ານຂອງກິດຈະການບໍລິສັດ ແລະ ກຳໄດ້ບັນຫາທີ່ພົ້ນເດັ່ນທີ່ເກີດຂຶ້ນ, ເຫັນໄດ້ດ້ານສະດວກ ແລະ ຂໍ້ຫຍຸ້ງຍາກ ໃນການດຳເນີນກິດຈະການຂອງບໍລິສັດ ເພື່ອເປັນຂໍ້ມູນໃຫ້ແກ່ ຄສຜງ ໃນການຕິດຕາມກວດກາ ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງແກ້ໄຂຕາມລະບຽບການ.

(ວິນັດ)

# ຫາລືບັນດາເນື້ອໃນ ເພື່ອກະກຽມໃສ່ ກອງປະຊຸມສະໄໝສາມັນເທື່ອ 4



(ສພຊ) ໃນຕອນເຊົ້າ ວັນທີ 17 ພະຈິກ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງສະຫວັນນະເຂດ, ຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ໄດ້ເປີດກອງປະຊຸມປຶກສາຫາລືຮ່ວມກັບ 10 ພະແນກການ-ກົມກອງ ທີ່ຂຶ້ນກັບຄະນະກຳມະການຂອງຕົນ ໂດຍການເປັນປະທານກອງປະຊຸມຂອງທ່ານ ຄຳຜັນ ຄູນສະຫວັນ ຮອງປະທານສະພາປະຊາຊົນແຂວງ, ມີບັນດາທ່ານປະທານ-ຮອງປະທານ, ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງທີ່ສັງກັດຢູ່ໃນຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ, ບັນດາຫົວໜ້າ-ຮອງຫົວໜ້າ ແລະ ຜູ້ຕາງໜ້າຂອງພະແນກການ-ກົມກອງ 10 ພາກສ່ວນ ພ້ອມທັງພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນວາລະກອງປະຊຸມ, ປະທານໄດ້ກ່າວຈຸດປະສົງ ແລະ ເປີດກອງປະຊຸມ ຢ່າງເປັນທາງການ. ຈາກນັ້ນ, ກອງປະຊຸມໄດ້ຮັບຟັງການລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ຂອງພະແນກການ-ກົມກອງ 10 ພາກສ່ວນ, ຕາມຄຳຖາມເຈາະຈີ້ມທີ່ສະພາປະຊາຊົນແຂວງ ໄດ້ສົ່ງໃຫ້ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ທີ່ໄດ້ຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງ ຊຸດທີ II, ຜ່ານການຮັບຟັງການລາຍງານເຫັນໄດ້ຂໍ້ສະດວກ ແລະ ບັນຫາຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດວຽກງານ ເຊິ່ງບັນດາທ່ານຜູ້ແທນກອງປະຊຸມໄດ້ມີການປະກອບຄຳຄິດເຫັນແລກປ່ຽນໃນການຈັດຕັ້ງປະຕິບັດຄາດໝາຍສູ້ຊົນຂອງຂົງເຂດເສດຖະກິດ, ແຜນການ ແລະ ການເງິນ ພ້ອມທັງຄົ້ນຄວ້າປຶກສາຫາລືການກະກຽມບັນດາເນື້ອໃນທີ່ຈະນຳເຂົ້າກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ທີ່ຈະໄດ້ຈັດຂຶ້ນໃນຕົ້ນປີ 2023.

ໃນຕອນທ້າຍ, ປະທານກອງປະຊຸມ ໄດ້ມີຄຳເຫັນສະຫລຸບສັງລວມບັນຫາ ແລະ ສະແດງຄວາມຊົມເຊີຍຕໍ່ຜົນສຳເລັດ ພ້ອມທັງເນັ້ນໃຫ້ທຸກພາກສ່ວນ ຈົ່ງສືບຕໍ່ເພີ່ມທະວີໃນການຈັດຕັ້ງປະຕິບັດບັນດາຄາດໝາຍສູ້ຊົນ ແລະ ການແກ້ໄຂບັນຫາຂໍ້ຄົງຄ້າງໃຫ້ມີຜົນສຳເລັດ; ຂໍ້ມູນທີ່ທຸກພາກສ່ວນລາຍງານ ຄະນະກຳມະການກໍຄືສະພາປະຊາຊົນແຂວງສະຫວັນນະເຂດ ຈະສັງລວມຂໍ້ມູນແລ້ວລາຍງານຕໍ່ຄະນະປະຈຳສະພາປະຊາຊົນແຂວງ ແລະ ສະພາແຫ່ງຊາດ ເຊິ່ງຈະເປັນຂໍ້ມູນພື້ນຖານໃນການກະກຽມເນື້ອໃນໃຫ້ແກ່ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ທີ່ຈະດຳເນີນໃນມໍ່ໆນີ້.

(ວັນນະສຸກ ອິນສີຊຽງໃໝ່)

# ເຄື່ອນໄຫວວຽກງານຢູ່ກອງບັນຊາການ ທະຫານແຂວງຫລວງພະບາງ



(ສພຊ) ໃນຕອນເຊົ້າຂອງວັນທີ 9 ພະຈິກ 2022 ທ່ານ ວົງສະຫວັນ ເທບພະຈັນ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 6, ປະທານສະພາປະຊາຊົນແຂວງ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ເອກະສານຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX, ສະພາປະຊາຊົນແຂວງຫລວງພະບາງ ຊຸດທີ II ແລະ ບາງເນື້ອໃນເອກະສານມະຕິກອງປະຊຸມຄົບຄະນະ ຄັ້ງທີ 4 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ຢູ່ທີ່ຫ້ອງປະຊຸມໃຫຍ່ກອງບັນຊາການທະຫານແຂວງຫລວງພະບາງ; ມີຄະນະພັກ-ຄະນະນຳ, ຄະນະຫ້ອງ ຈຳນວນ 6 ຫ້ອງ, ພະນັກງານ, ນັກຮົບ ເຂົ້າຮ່ວມຮັບຟັງ ຕ້ອນຮັບໂດຍສະຫາຍ ພົທ. ວິລະສິນ ມິດຕະພອນ ຮອງຫົວໜ້າການເມືອງ ກອງບັນຊາການທະຫານແຂວງ.

ໂອກາດນີ້, ສະຫາຍ ພົທ. ວິລະສິນ ມິດຕະພອນ ໄດ້ຜ່ານບົດສະຫລຸບການຈັດຕັ້ງປະຕິບັດໜ້າທີ່ວຽກງານ ໃນໄລຍະ 9 ເດືອນຜ່ານມາ ແລະ ທິດທາງແຜນການ ໃນ 3 ເດືອນຕໍ່ໜ້າ ເຊິ່ງທ່ານໄດ້ຍົກໃຫ້ເຫັນບາງຜົນສຳເລັດໃນການຈັດຕັ້ງປະຕິບັດຕາມ 4 ໜ້າທີ່ໃຫຍ່ 26 ແຜນງານທີ່ຄະນະພັກ-ຄະນະນຳ ກະຊວງປ້ອງກັນປະເທດວາງອອກ ໂດຍທ່ານໄດ້ຍົກໃຫ້ເຫັນທັງຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ບົດຮຽນທີ່ຖອດຖອນໄດ້ ຂອງການຈັດຕັ້ງປະຕິບັດວຽກງານ ໃນໄລຍະຜ່ານມາ ໃນນັ້ນ, ໄດ້ຍົກໃຫ້ເຫັນສະພາບຄວາມສະຫງົບ, ການບຳລຸງກໍ່ສ້າງວຽກງານແນວຄິດ, ວຽກງານພະລາທິການ ແລະ ວຽກງານການພົວພັນຮ່ວມມືສາກົນ ໃຫ້ກອງປະຊຸມຊາບໂດຍຫຍໍ້.

ຈາກນັ້ນ, ທ່ານ ວົງສະຫວັນ ເທບພະຈັນ ໄດ້ເຜີຍແຜ່ເອກະສານຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX, ສະພາປະຊາຊົນແຂວງຫລວງພະບາງ ຊຸດທີ II ແລະ ບາງເນື້ອໃນເອກະສານມະຕິກອງປະຊຸມຄົບຄະນະ ຄັ້ງທີ 4 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ໃຫ້ບັນດາຄະນະພັກ-ຄະນະນຳ, ຄະນະຫ້ອງ ແລະ ພະນັກງານ, ນັກຮົບໄດ້ຮັບຟັງ ເຊິ່ງຜົນຂອງກອງປະຊຸມແມ່ນໄດ້ພິຈາລະນາ ແລະ ຮັບຮອງເອົາຫລາຍໆບັນຫາທີ່ສຳຄັນຂອງຊາດ ແລະ ຂອງແຂວງ.

ການເຜີຍແຜ່ເອກະສານໃນຄັ້ງນີ້ ແມ່ນແນໃສ່ເຮັດໃຫ້ນາຍ ແລະ ພົນທະຫານ ມີຄວາມຮັບຮູ້, ເຂົ້າໃຈ ແລະ ກຳແໜ້ນຕໍ່ແນວທາງ ນະໂຍບາຍຂອງພັກ, ຮັບຮູ້ເນື້ອໃນຜົນສຳເລັດຂອງກອງປະຊຸມ ເພື່ອນຳໄປຈັດຕັ້ງຜັນຂະຫຍາຍເຂົ້າສູ່ການດຳລົງຊີວິດ ແລະ ການຈັດຕັ້ງປະຕິບັດໜ້າທີ່ວຽກງານ ໃຫ້ຖືກຕ້ອງ, ສອດຄ່ອງ ແນວທາງຂອງພັກ ແລະ ຕາມລະບຽບ, ກົດໝາຍຂອງລັດ.

(ໄວພົດ ເສລີພົງໄຊ)

# ສພຂ ອັດຕະປື ສະເໜີອົງການປົກຄອງແຂວງ ເລັ່ງແກ້ໄຂ ບັນຫາຢາເສບຕິດໃຫ້ເດັດຂາດ, ໂປ່ງໃສ ແລະ ເປັນມືອາຊີບ

**ຮຽບຮຽງໂດຍ: ວິນັດ**



ບັນດາສະມາຊິກສະພາປະຊາຊົນແຂວງອັດຕະປື ໄດ້ສຸມໃສ່ປະກອບຄຳເຫັນຕໍ່ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ, ໃນວາລະຂອງການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງອັດຕະປື ຊຸດທີ II ເມື່ອເດືອນສິງຫາ 2022 ສະມາຊິກສະພາປະຊາຊົນແຂວງ ໄດ້ສະເໜີໃຫ້ອົງການປົກຄອງແຂວງ ກໍຄືອົງການໄອຍະການປະຊາຊົນແຂວງ, ສືບຕໍ່ເອົາໃຈໃສ່ຢ່າງເຂັ້ມງວດໃນການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ໂດຍການສຸມໃສ່ 3 ຫລັກການຕົ້ນຕໍຄື: ຄວາມເດັດຂາດ, ຄວາມໂປ່ງໃສ ແລະ ຄວາມເປັນມືອາຊີບ.

ທ່ານ ສຸກສຳລານ ໄຊຍະແສງ ຮອງປະທານສະພາປະຊາຊົນແຂວງ ໄດ້ຕາງໜ້າໃຫ້ຄະນະປະຈຳສະພາປະຊາຊົນແຂວງ ປະກອບຄຳເຫັນໃສ່ບົດລາຍງານດັ່ງກ່າວ ໂດຍໄດ້ສະເໜີໃຫ້ອົງການປົກຄອງແຂວງ ແລະ ອົງການໄອຍະການປະຊາຊົນແຂວງ ເພີ່ມທະວີການຍົກສູງຄວາມສາມາດ ໃນການນຳພາ-ຊີ້ນຳການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃຫ້ກາຍເປັນຄວາມຮັບຜິດຊອບໂດຍກົງຂອງຄະນະພັກ, ຄະນະນຳແຕ່ລະຂັ້ນ ໂດຍຈະຕ້ອງສຸມໃສ່ 3 ຫລັກການຕົ້ນຕໍຄືຄວາມເດັດຂາດ, ຄວາມໂປ່ງໃສ, ຄວາມເປັນມືອາຊີບ ແລະ ການຕິດຕາມກວດກາ ການນຳໃຊ້ 7 ມາດຕະການສະກັດກັ້ນຂອງອົງການສືບສວນ-ສອບສວນ ຕາມມາດຕາ 136 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ເພື່ອຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງກວ່າເກົ່າ, ສືບຕໍ່ສ້າງຄວາມຮັບຮູ້ໃຫ້ສັງຄົມ ດ້ວຍການສຶກສາອົບຮົມ, ໂຄສະນາເຜີຍແຜ່ລະບຽບກົດໝາຍ, ຜົນຮ້າຍ ແລະ ຄວາມອັນຕະລາຍຂອງຢາເສບຕິດ ແລະ ຖືເອົາການແກ້ໄຂບັນຫາຢາເສບຕິດ ເປັນມາດຕະຖານເງື່ອນໄຂໜຶ່ງ ເຂົ້າໃນຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ, ສ້າງບ້ານປອດຢາເສບຕິດ, ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຢູ່ບັນດາບ້ານ, ສຳນັກງານ, ອົງການ, ສະຖາບັນການສຶກສາ, ໂຮງໝໍ, ໂຮງຈັກ-ໂຮງງານ ແລະ ບັນດາຫົວໜ່ວຍການຜະລິດ-ທຸລະກິດ ເພື່ອສ້າງໃຫ້ຄົນມີສະຕິລະວັງຕົວ, ມີລະບຽບວິໄນ, ມີຄວາມສະຫງົບປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍສັງຄົມ, ສືບຕໍ່ປັບປຸງກົນໄກ, ລະບຽບການທີ່ກົດໜ່ວງຕໍ່ການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ໂດຍສະເພາະແມ່ນການກຳນົດມາດຕະຖານໂທດ, ການແກ້ໄຂຂອງກາງ ຫລືວັດຖຸ, ຊັບສິນ ທີ່ໄດ້ມາຈາກການກະທຳຜິດຢາເສບຕິດ, ບໍ່ປະໃຫ້ເປັນຊ່ອງວ່າງ ເພື່ອສວຍໃຊ້ໃນການຕໍ່ລອງ, ແກ້ໄຂຄວາມຊັກຊ້າໃນການກວດສອບ, ກວດກາ, ວິໄຈ ປະລິມານສານເສບຕິດ ເພື່ອຮັບປະກັນໃຫ້ແກ່ການແກ້ໄຂຄະດີຢາເສບຕິດ ມີຄວາມວ່ອງໄວ, ມີຄຸນນະພາບ, ມີຄວາມເດັດຂາດ, ໂປ່ງໃສ ແລະ ເປັນມືອາຊີບ ໃຫ້ມີປະສິດທິຜົນສູງກວ່າເກົ່າ, ເອົາໃຈໃສ່ຕໍ່ການບຳບັດ-ປິ່ນປົວຜູ້ຕິດຢາເສບຕິດ ດ້ວຍການສົມທົບລະຫວ່າງການບຳບັດ, ປິ່ນປົວ, ຟື້ນຟູສຸຂະພາບຂອງຜູ້ຕິດຢາເສບຕິດ ກັບການດັດສ້າງ ແລະ ເຝິກສີມື, ເຝິກອາຊີບໃຫ້ເຂົາເຈົ້າ ເຊິ່ງໃນປັດຈຸບັນ ກໍຄືໃນຊຸມປີຕໍ່ໜ້າ ເຫັນວ່າຍັງມີຄວາມຈຳເປັນຕ້ອງໄດ້ປັບປຸງສູນບຳບັດ-ປິ່ນປົວ ແລະ ເຝິກວິຊາຊີບ ເພື່ອຮັບໃຊ້ໃຫ້ແກ່ວຽກງານດັ່ງກ່າວ, ຄົ້ນຄວ້າປະກອບພາຫະນະ, ອຸປະກອນຮັບໃຊ້ທີ່ຈຳເປັນ ແລະ ບຸກຄະລາກອນແພດໝໍ ກໍຄືວິຊາການດ້ານຕ່າງໆ ໃຫ້ມີຄວາມຮັບປະກັນຢ່າງເໝາະສົມ. ສ່ວນຄາດໝາຍຕໍ່ໄປແມ່ນຕ້ອງໄດ້ພະຍາຍາມເຮັດໃຫ້ຜູ້ຕິດຢາເສບຕິດຫລຸດລົງເປັນກ້າວໆ ເຊິ່ງນັ້ນແມ່ນຕົວຊີ້ວັດໜຶ່ງທີ່ຊີ້ໃຫ້ເຫັນປະສິດທິຜົນໃນການແກ້ໄຂບັນຫາຢາເສບຕິດຢູ່ແຂວງອັດຕະປື, ເອົາໃຈໃສ່ແກ້ໄຂປາກົດການຫຍໍ້ທໍ້ ແລະ ຄວາມບໍ່ໂປ່ງໃສ ໃນການເຄື່ອນໄຫວປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ກ່ຽວຂ້ອງ ຢ່າງເດັດຂາດ ແລະ ທັນການ, ຕ້ອງກຳນົດລະບອບລະບຽບການ, ກົນໄກ ແລະ ການຈັດຕັ້ງທີ່ເຂັ້ມແຂງ ກ່ຽວກັບບັນຫາທີ່ພົວພັນເຖິງການແຈ້ງຂໍ້ມູນຂອງກາງ, ຊັບສິນ, ການອາຍັດຊັບ, ການຍຶດຊັບ, ການຮິບວັດຖຸ ຈາກຜູ້ກະທຳຜິດຢາເສບຕິດ ທີ່ອາດເປັນຊ່ອງວ່າງພາໃຫ້ເກີດປາກົດການຫຍໍ້ທໍ້, ພ້ອມທັງເອົາໃຈໃສ່ ການແກ້ໄຂກໍລະນີຕ່າງໆ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ຫລັກສິນທຳ ໃນການດຳເນີນຄະດີຢາເສບຕິດ, ສືບຕໍ່ເພີ່ມທະວີຮ່ວມມືກັບສາກົນ, ກ່ຽວກັບຂະບວນການຜະລິດ, ຂົນສົ່ງ, ຄ້າຂາຍຢາເສບຕິດ ແລະ ກັບບັນດາແຂວງ, ປະເທດໃກ້ຄຽງ ໃນອະນຸພາກພື້ນໃຫ້ແໜ້ນແຟ້ນ, ເປັນລະບົບ, ຮັດກຸມ ເພື່ອສະກັດກັ້ນ ແລະ ປາບປາມຂະບວນການດັ່ງກ່າວໃຫ້ແຂງແຮງ, ມີຈຸດສຸມ ແລະ ມີປະສິດທິຜົນສູງ.



ພາບປະກອບ

ຜູ້ແທນປະຊາຊົນ
ສຽງຂອງສະພາແຫ່ງຊາດ PHOUTHEN PASAXON





## ສຸກສະບາຍຫາຍໂຣຄ

# ເຫືອກບວມແບບໃດ ຈຶ່ງຄວນໄປພົບທັນຕະແພດ

ແປ ແລະ ຮຽບຮຽງໂດຍ: ສາວແວ່ນ



ເຫືອກບວມ ສາມາດເກີດຂຶ້ນໄດ້ກັບທຸກຄົນ ເຊິ່ງສ່ວນຫລາຍມັກຈະມີອາການເຈັບແຂ້ວ, ເຫືອກໃຄ່ບວມແດງເມື່ອຖູແຂ້ວຈະຮູ້ສຶກເຈັບເຫືອກ ແລະ ມີເລືອດອອກຕາມຫວ່າງແຂ້ວ ເຮັດໃຫ້ເກີດມີກິ່ນປາກ ຖ້າບໍ່ປິ່ນປົວກໍຈະເຮັດໃຫ້ມີການອັກເສບຊຳເຮື້ອທີ່ຮຸນແຮງໄດ້ ສະນັ້ນ, ໃນຄໍລຳສຸກສະບາຍຫາຍໂລຄາສະບັບນີ້ເຮົາມີຕົ້ນປາຍສາຍເຫດ ແລະ ວິທີການຮັກສາເຫືອກ ເພື່ອບໍ່ໃຫ້ເຫືອກບວມ ມາແນະນຳໃຫ້ບັນດາທ່ານຜູ້ອ່ານໄດ້ຮັບຮູ້ນຳກັນ ດັ່ງນີ້:

ເຫືອກບວມມີຫລາຍແບບທີ່ແຕກຕ່າງກັນ ຖ້າບໍ່ຮ້າຍແຮງກໍສາມາດປິ່ນປົວໄດ້ ແຕ່ບາງທ່ານອາດຈະມີອາການອັກເສບທີ່ກະທົບກັບການກິນ ແລະ ການໃຊ້ຊີວິດປະຈຳວັນ ຖ້າຫາກທ່ານມີອາການດັ່ງຕໍ່ໄປນີ້ ຄວນໄປພົບທັນຕະແພດ ເພື່ອຊອກຫາວິທີປິ່ນປົວຢ່າງຖືກຕ້ອງ

**1. ເຫືອກບວມເປັນໜອງ**

ເກີດຈາກການສະສົມຫີນປູນໃນແຂ້ວ ເຮັດໃຫ້ເຫືອກບໍລິເວນອ້ອມຂ້າງ ເກີດການອັກເສບ, ມີກິ່ນປາກ ແລະ ເລືອດອອກຕາມຫວ່າງແຂ້ວ ໃນເວລາຖູແຂ້ວ;

**2. ເຫືອກບວມອັກເສບ**

ຄົນເຈັບທີ່ມີເຫືອກບວມ ແລະ ອັກເສບຊຳເຮື້ອ ແຕ່ບໍ່ປິ່ນປົວ ເຫືອກຈະເລີ່ມໃຄ່ແດງ ແລະ ເກີດໜອງໄຫລອອກມາຈາກຂອບແຂ້ວ ເຊິ່ງເປັນສັນຍານອາການອັກເສບຮຸນແຮງ ທີ່ບໍ່ຄວນລະເລີຍ ຄວນຟ້າວໄປພົບທັນຕະແພດຢ່າງຮີບດ່ວນ.

**3. ເຫືອກກົກແຂ້ວບວມ**

ອາການເຈັບເຫືອກຢູ່ບໍລິເວນກົກແຂ້ວ ສາມາດເກີດໄດ້ຈາກຫລາຍປັດໄຈລວມທັງແຂ້ວຊາວ,ແຂ້ວແມງ, ແຂ້ວແຕກ ແລະ ເຫືອກອັກເສບ ເຮັດໃຫ້ເກີດອາການເຈັບ ແລະ ລົບກວນໃນການໃຊ້ຊີວິດປະຈຳວັນ.

**4. ເຫືອກອັກເສບເປັນຕຸ່ມ**

ເຫງືອກເປັນຕຸ່ມສີແດງນ້ອຍໆ ຫາກປະໄວ້ດົນ ຈະເລີ່ມມີໜອງໄຫລອອກມາ ອາດຈະເກີດຈາກການແຂ້ວແມງທີ່ຢູ່ເລິກເຖິງເສັ້ນປະສາດແຂ້ວ;

**5. ເຫືອກບວມຈາກກະດູກຊອດ**

ໃຫ້ສັງເກດວ່າຖ້າເຫືອກມີສີຂາວຈາງໆ ເປັນໄປໄດ້ວ່າ ມັນອາດຈະເປັນສັນຍານຂອງກະດູກທີ່ພະຍາຍາມປົ່ງອອກມາເຮັດໃຫ້ເຫືອກບວມ, ຮູ້ສຶກເຈັບ ແລະ ໃນທີ່ສຸດກໍອັກເສບ;

**6. ເຫືອກບວມຈາກຜົນຂ້າງຄຽງຂອງຢາ**

ບາງຄັ້ງເຫືອກໃຄ່ ອາດເກີດຈາກການແພ້ຢາບາງຊະນິດ ຫລື ເປັນຜົນຂ້າງຄຽງຈາກການໃຊ້ຢາ ເຮັດໃຫ້ບໍລິເວນເຫືອກບວມ, ແດງຂຶ້ນກວ່າປົກກະຕິ ຄວນນຳຢາທີ່ໃຊ້ຢູ່ ໄປປຶກສາກັບທ່ານໝໍ ເພື່ອປະເມີນອາການ.

ຄົນທີ່ເຫືອກບວມເລື້ອຍໆ ຄວນເອົາໃຈໃສ່ຕໍ່ສຸຂະພາບໃນປາກ ແລະ ແຂ້ວ ໝັ່ນຖູແຂ້ວ ແລະ ໃຊ້ນ້ຳຢາບ້ວນປາກຢ່າງຖືກຕ້ອງ ເພື່ອກຳຈັດເຊື້ອແບັກທີເລຍໃນປາກ ແລະ ເສດອາຫານທີ່ຕິດຢູ່ລະຫວ່າງແຂ້ວ; ສຳລັບການດູແລສຸຂະພາບໃນຊີວິດປະຈຳວັນ ເຊັ່ນ: ຄວນງົດການສູບຢາ ແລ້ວດື່ມນ້ຳສະອາດ ແລະ ພັກຜ່ອນໃຫ້ພຽງພໍ ຫລີກລ່ຽງອາຫານທີ່ຫວານຫລາຍ ແລ້ວໝັ່ນໄປພົບທັນຕະແພດ ເພື່ອຂູດຫີນປູນທຸກໆ 6 ເດືອນ ເນື່ອງຈາກອາການເຫືອກບວມ ອາດຈະກັບຄືນມາເປັນຊ້ຳອີກ.

ສຳລັບຜູ້ທີ່ເຫືອກບວມບໍ່ຮ້າຍແຮງ ສາມາດບັນເທົາອາການໄດ້ໂດຍການໃຊ້ນ້ຳກ້ອນປະຄົບ ແລະ ກິນຢາແກ້ປວດ ເພື່ອບັນເທົາອາການເບື້ອງຕົ້ນ ຖ້າອາການຮຸນແຮງຂຶ້ນ ບໍ່ຄວນຊື້ຢາຕ້ານການອັກເສບມາກິນເອງ ແຕ່ຄວນໄປພົບທັນຕະແພດ ເພື່ອປິ່ນປົວຢ່າງເໝາະສົມ.

## ສາລາກະວີ

# ຜູ້ໃຫຍ່ ຄວນເປັນແບບຢ່າງ

\# ໂດຍ: ແກ້ວຕາວັນ

❊ ຜູ້ໃຫຍ່ເຄີຍຜ່ານຮ້ອນ ມາກ່ອນຫລາຍປີ
ປະສົບການມີຫລາຍ ກ່າຍກອງກັນລົ້ນ
ຄົນເກີດມາພາຍຊ້ອນ ລຸນຫລັງແລລໍ່າ
ນຳມາເປັນແບບເບົ້າ ເອົາໄວ້ຫລໍ່ຕົນ

❊ ຄົນວ່າຄົນເຜິ່ນຜູ້ ເນົາຢູ່ມາດົນ
ທຳຕົນເປັນຄົນດີ ທີ່ສັງຄົມຍໍຍ້ອງ
ບໍ່ຈອງຫອງຫາລື້ ໂລເລລອງລ່າຍ
ຄົນພາຍຫລັງຈຶ່ງໄດ້ ມີເບົ້າຫລໍ່ດີ

❊ ຫາກວ່າມາກ່ອນແລ້ວ ກະທຳຊົ່ວເລວຊາມ
ຊອກແຕ່ທຳຕົວເໝືອນ ຊາດເດຍລະສານເຊື້ອ
ເມື່ອຄົນຫລັງເຂົາຈ້ອງ ລອງເອົາເປັນຕົວຢ່າງ
ກໍຄືງໝາງໝົ່ນເສົ້າ ຫາເອົາດີບໍ່ໄດ້ ໃຈຊິເປື້ອນເປື່ອຍເໝັນ ຊັ້ນໃດ!

❊ ສາທຸ ຂໍໃຫ້ຜູ້ໃຫຍ່ໄດ້ ກະທຳແຕ່ຄວາມດີ
ເປັນທີ່ຄົນຄວນຍໍ ຊື່ນຊົມນິຍົມຍ້ອງ
ໃຫ້ລູກຫລານເຫລັນຕ້ອງ ເອົາເປັນຕົວຢ່າງ
ຍ່າງຖືກທາງທ່ຽງແທ້ ບໍ່ໂລເລແວ່ລ້ຽວ ໄປເບື້ອງບ່ອນບໍ່ດີ

❊ ສັງຄົມລາວຈຶ່ງໄດ້ ມີຄົນໃໝ່ພັນດີ
ສ້າງເມືອງເຮົາເຮືອງຮອງ ຮຸ່ງສີວິໄລກ້າວ
ໃຫ້ຊື່ສຽງລາວກ້ອງ ກອງໄກຄົນຊ່າ
ວ່າຄົນລາວເກັ່ງກ້າ ຄຸນສົມບັດພຽບພ້ອມ ສົມຊັ້ນຊື່ລາວ ຊອບແລ້ວ!



## ທັກທາຍ ລະບາຍ

\# ສາວຈົ້ມ

(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)

❊ **ຫຍັບ**ໃກ້ເຂົ້າມາ ບັນຍາກາດວັນຊາດທີ **2 ທັນວາ** ທີ່ຈະບັນຈົບຄົບຮອບ **47 ປີ** ໃນອີກບໍ່ເທົ່າໃດວັນຂ້າງໜ້ານີ້ ທີ່ສະພາແຫ່ງຊາດ ພວມກະກຽມຈັດງານບຸນອຸທິດກຸສົນ ແດ່ອະດີດການນຳສະພາປະຊາຊົນສູງສຸດ ແລະ ສະພາແຫ່ງຊາດ ເນື່ອງໃນໂອກາດວັນຊາດທີ **2 ທັນວາ** ທີ່ຈະມາເຖິງນີ້ **47 ປີ**ເອກອ້າງ ຜົນງານໃຫຍ່ການນຳພາ ປອງປະຊາມີສຸກ ຮຸ່ງເຮືອງຈະເລີນກ້າວ ຄາວນີ້ສົມຄວນແລ້ວ ການນຳພັກ-ລັດ ປອງປະຊາພ້ອມ ລ່ວມສົ່ງກຸສົນ **ນັ້ນນາ!**

❊ **ເສັດ**ສິ້ນລົງຢ່າງເປັນທາງການ ກອງປະຊຸມຍົກສູງຄຸນນະພາບທາງດ້ານເນື້ອໃນ ໃຫ້ແກ່ກອງປະຊຸມສະໄໝສາມັນ **ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX** ເຊິ່ງຈັດຂຶ້ນວັນທີ **21-26** ຜ່ານມາ ທີ່ສູນຝຶກອົບຮົມຫລັກຫ້າ ນະຄອນຫລວງວຽງຈັນ ຫລາຍບັນຫາຍົກຂຶ້ນ ຖາມຕອບຕັ້ງປະເດັນ ອະທິບາຍລາຍງານ ເພື່ອກຽມຄວາມພ້ອມ ທັງພ່າປັບປຸງແກ້ ບາງປະເດັນຄາຂອດ ບໍ່ໃຫ້ຖຽງຂອດຄ້າງ ລ່າເຮື້ອຍືດຍາວ **ນັ້ນແລ້ວ!**

❊ **ພິ**ທີເປີດເທສະການແຫ່ພຣະໄຕຣປິດົກ ສືບສານວັດທະນະທຳ ລ່າວົງສາລະວັນ ໃນນັ້ນ. ເພີ່ນໄດ້ປະກາດຮັບຮອງ**ຫໍໄຕຣປິດົກ ເປັນມໍລະດົກແຫ່ງຊາດ** ລະດັບທ້ອງຖິ່ນ ຢ່າງເປັນທາງການ ໃນອາທິດຜ່ານມາ ເຊີນປະຊາພີ່ນ້ອງ ທ່ອງທ່ຽວເຢືອນຊົມ ມໍລະດົກຂອງແຂວງ ສືບສານເສີມສ້າງ ຕາມຮ່າງເດີມດາເຖົ້າ ພາຍຫລັງເຫລືອຊາກ ຈາກຝຸງມານຈູດຖິ້ມ ຄາວນັ້ນເມື່ອສົງຄາມ **ນັ້ນແລ້ວ!**

## ຊອບຍິ້ມ

\# ແອ່ນຕຸ້ງ

**ເລື່ອງ: ມີຊອບເຂດ**

ທ້າວ ເກດ (ນາມສົມມຸດ) ພາລູກໄປສົ່ງຢູ່ໂຮງຮຽນພ້ອມກັບເມຍ ພໍໄປຮອດໂຮງຮຽນລາວກໍ່ຍິ້ມນ້ອຍຍິ້ມໃຫຍ່ ຢອກສາວນັກຮຽນ, ພໍເມຍຫລຽວເຫັນເລີຍຄຶດຢາກຮ້າຍ ທັງເວົ້າຂຶ້ນວ່າ:

**ເມຍ:** ຈັ່ງແມ່ນອ້າຍຢອກສາວບໍ່ເລືອກໜ້າ ບໍ່ເລືອກສະຖານທີ່ເນາະເຈົ້ານີ້

**ຜົວ:** ນະໆເຈົ້ານີ້ ຢ່າດູຖູກຂ້ອຍເດີ ເພາະອ້າຍເລືອກຢອກແຕ່ຄົນງາມໆ ແລະກະຢອກຢູ່ໃນຮົ້ວໂຮງຮຽນເທົ່ານັ້ນໃດເດີ!

**ເມຍ:** ຮືຍໆ! ຈັ່ງແມ່ນຊາດເຈົ້ານໍ!!!!!!



## ຄະຕິເຕືອນໃຈ

\# ດອກລະຍອມ

ມະນຸດໃນລຸ່ມຟ້າ ໃຜບໍ່ທ່ອນຕິຕົນເອງ ດອກນາ!
ມີແຕ່ຕິທາງເຂົາ ວ່າບໍ່ດີທັງນັ້ນ
ຄັນວ່າເຮົາດີແທ້ ຢ່ານິນທາຄົນອື່ນ
ຊົ່ວດີຄົນເບິ່ງຮູ້ ສຸທາເລື້ອງໃສ່ກັນ

# ກົດໝາຍວ່າດ້ວຍການສຳຫລວດວັດແທກ ແລະ ສ້າງແຜນທີ່

ຕໍ່ຈາກສະບັບກ່ອນ...

**ມາດຕາ 72 ການຍື່ນຄຳຮ້ອງຂໍດຳເນີນທຸລະກິດ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດຳເນີນທຸລະກິດກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ຢູ່ໃນບັນຊີຄວບຄຸມ ໃຫ້ຍື່ນຄຳຮ້ອງ ພ້ອມດ້ວຍເອກະ ສານປະກອບຕໍ່ຫ້ອງການບໍລິການການລົງທຶນປະຕູດຽວ ຂັ້ນສູນກາງ ຫຼື ຂັ້ນແຂວງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດຳເນີນທຸລະກິດກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ບໍ່ຢູ່ໃນບັນຊີຄວບຄຸມ ໃຫ້ຍື່ນຄຳຮ້ອງພ້ອມດ້ວຍເອກະສານປະກອບຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ແລະ ຕ້ອງໄດ້ຂໍອະນຸຍາດທາງດ້ານວິຊາການຈາກກະຊວງພາຍໃນ.

**ມາດຕາ 73 ການພິຈາລະນາອະນຸຍາດດຳເນີນທຸລະກິດ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່**

ກະຊວງພາຍໃນ ຕ້ອງພິຈາລະນາອະນຸຍາດທາງດ້ານວິຊາການ ຫຼື ອະນຸຍາດດຳເນີນທຸລະກິດ ຕາມກຳນົດເວລາ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍວ່າດ້ວຍວິສາຫະກິດ.

**ມາດຕາ 74 ການໂຈະການດຳເນີນທຸລະກິດ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່**

ການດຳເນີນທຸລະກິດ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຈະຖືກໂຈະໃນກໍລະນີ ດັ່ງນີ້:

1. ການສະເໜີຂອງຜູ້ດຳເນີນທຸລະກິດ;
2. ການສັ່ງໂຈະຂອງອົງການຄຸ້ມຄອງວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ເພື່ອກວດກາດ້ວຍເຫດຜົນ ດັ່ງນີ້:

2.1 ດຳເນີນທຸລະກິດບໍ່ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍ ທີ່ໄດ້ຮັບອະນຸຍາດ;

2.2 ດຳເນີນທຸລະກິດບໍ່ສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ;

2.3 ສ້າງຄວາມເສຍຫາຍຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ;

2.4 ບໍ່ດຳເນີນທຸລະກິດຕໍ່ເນື່ອງເປັນເວລາ ສອງປີ.

ການໂຈະການດຳເນີນທຸລະກິດ ຕ້ອງມີກຳນົດເວລາທີ່ແນ່ນອນ ເພື່ອໃຫ້ຊອກຫາວິທີແກ້ໄຂ ຫຼື ປັບປຸງ ສາເຫດທີ່ພາໃຫ້ມີການໂຈະນັ້ນ. ຖ້າຜູ້ດຳເນີນທຸລະກິດ ຫາກບໍ່ແກ້ໄຂ ຫຼື ປັບປຸງ ພາຍໃນເວລາ ຫົກເດືອນ ແລ້ວ ກະຊວງພາຍໃນ ສາມາດຍົກເລີກການດຳເນີນທຸລະກິດ.

**ມາດຕາ 75 ການຍົກເລີກການດຳເນີນທຸລະກິດ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່**

ການດຳເນີນທຸລະກິດ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຈະຖືກຍົກເລີກໃນກໍລະນີ ດັ່ງນີ້:

1. ຜູ້ດຳເນີນທຸລະກິດຂໍຍົກເລີກ ໂດຍມີເຫດຜົນພຽງພໍ;
2. ກະຊວງພາຍໃນ ສັ່ງໃຫ້ຍົກເລີກດ້ວຍເຫດຜົນ ດັ່ງນີ້:

2.1 ຜູ້ດຳເນີນທຸລະກິດລະເມີດກົດໝາຍ, ລະບຽບການກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ແລະ ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ;

2.2 ຜູ້ດຳເນີນທຸລະກິດບໍ່ແກ້ໄຂ ຫຼື ປັບປຸງ ຕາມການສັ່ງໂຈະ;

2.3 ສານຕັດສິນຖອນໃບອະນຸຍາດ ຫຼື ໃຫ້ລົ້ມລະລາຍ;

2.4 ຜູ້ຮັບອະນຸຍາດ ບໍ່ດຳເນີນທຸລະກິດພາຍຫຼັງໄດ້ຮັບອະນຸຍາດເປັນເວລາ ສອງປີ.

**ມາດຕາ 76 ສິດ ແລະ ພັນທະຂອງຜູ້ດຳເນີນທຸລະກິດ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່**

ຜູ້ດຳເນີນທຸລະກິດ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ມີ ສິດ ແລະ ພັນທະ ດັ່ງນີ້:

1. ໄດ້ຮັບຂໍ້ມູນ ຂ່າວສານ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;
2. ຮ້ອງທຸກຕໍ່ອົງການທີ່ມີສິດອຳນາດກ່ຽວຂ້ອງ ກ່ຽວກັບການລະເມີດກົດໝາຍ ຂອງພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
3. ດຳເນີນທຸລະກິດຖືກຕ້ອງຕາມການອະນຸຍາດ, ມາດຕະຖານເຕັກນິກ ແລະ ກົດໝາຍ ຢ່າງເຂັ້ມງວດ;
4. ຝຶກອົບຮົມບຸກຄະລາກອນ ໃຫ້ມີຄວາມຮູ້, ຄວາມສາມາດ ແລະ ຄວາມຮັບຜິດຊອບ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່;
5. ປະກອບສ່ວນທາງດ້ານທຶນຮອນ ຫຼື ແຮງງານ ເຂົ້າໃນການພັດທະນາວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;
6. ໃຫ້ການຮ່ວມມື, ສະໜອງຂໍ້ມູນ ຂ່າວສານ ແລະ ອຳນວຍຄວາມສະດວກ ໃຫ້ແກ່ພະນັກງານ-ລັດ ຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
7. ໄດ້ຮັບນະໂຍບາຍປົກປ້ອງສິດອື່ນ ຢ່າງເປັນທຳ ຕາມກົດໝາຍ;
8. ເສຍຄ່າທຳນຽມ ແລະ ຄ່າບໍລິການ ຕາມກົດໝາຍ ແລະ ລະບຽບການ;
9. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ພາກທີ VII
## ຂໍ້ຫ້າມ

**ມາດຕາ 77 ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ນຳເອົາຂໍ້ມູນກ່ຽວກັບການສຳຫຼວດວັດແທກ, ສ້າງແຜນທີ່ ແລະ ຂໍ້ມູນ ຂ່າວສານ ພູມສາດ ໄປນຳໃຊ້ໃນທາງທີ່ບໍ່ຖືກຕ້ອງ ທີ່ສົ່ງຜົນສະທ້ອນຕໍ່ຄວາມໝັ້ນຄົງຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
2. ທຳລາຍ, ມ້າງເພ, ຍົກຍ້າຍ ໂຄງລ່າງພື້ນຖານການສຳຫຼວດວັດແທກ ເປັນຕົ້ນ ໂຄງລ່າງພື້ນຖານສຳຫຼວດວັດແທກ, ສະຖານີອ້າງອີງການວັດແທກແບບຕໍ່ເນື່ອງ;
3. ນຳໃຊ້ໂຄງລ່າງພື້ນຖານການສຳຫຼວດວັດແທກ, ລະບົບເຄົ້າພິກັດການສຳຫຼວດວັດແທກ, ຂໍ້ມູນ ຕາໜ່າງເຄົ້າການສຳຫຼວດວັດແທກແຫ່ງຊາດ ໂດຍບໍ່ໄດ້ຮັບອະນຸຍາດ;
4. ຂັດຂວາງການເຄື່ອນໄຫວ ແລະ ປະຕິບັດໜ້າທີ່ທາງລັດຖະການຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
5. ສວຍໃຊ້ການເຄື່ອນໄຫວວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ເປັນການລະເມີດກົດໝາຍ ແລະ ສ້າງຄວາມເສຍຫາຍແກ່ປະເທດຊາດ ແລະ ປະຊາຊົນ;
6. ຈັດພິມ, ຮວບຮວມ, ດັດແປງ, ສຳເນົາຖ່າຍ, ສະໜອງ ຂໍ້ມູນ ແລະ ຜະລິດຕະພັນ ສຳຫຼວດວັດແທກ ແລະ ແຜນທີ່ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ບໍ່ຖືກຕ້ອງ ຕາມກົດໝາຍ;
7. ດຳເນີນການສຳຫຼວດວັດແທກ ແລະ ສ້າງແຜນທີ່ ໂດຍບໍ່ມີໃບອະນຸຍາດປະກອບອາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່;
8. ນຳເຂົ້າເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່ ໂດຍບໍ່ໄດ້ຮັບອະນຸຍາດ;
9. ສ້າງ, ນຳໃຊ້ ແລະ ເຜີຍແຜ່ ຂໍ້ມູນການສຳຫຼວດວັດແທກ, ສ້າງແຜນທີ່ ແລະ ຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ ເພື່ອໂຄສະນາຊວນເຊື່ອທີ່ຂັດກັບກົດໝາຍ ແລະ ລະບຽບການ;
10. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 78 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ປະຕິບັດໜ້າທີ່ດ້ວຍຄວາມບໍ່ຍຸຕິທຳ ຫຼື ລຳອຽງ, ປະໝາດ, ເລີ່ນເລີ້, ເມີນເສີຍ, ຂາດຄວາມຮັບ ຜິດຊອບ ຫຼື ຂາດຈັນຍາບັນ ທີ່ກໍ່ໃຫ້ເກີດຄວາມເສຍຫາຍແກ່ບຸກຄົນອື່ນ;
2. ປອມແປງ, ນຳໃຊ້, ເປີດເຜີຍ, ເຜີຍແຜ່ ແລະ ສະໜອງຂໍ້ມູນ ກ່ຽວກັບການສຳຫຼວດວັດແທກ, ສ້າງແຜນທີ່ ແລະ ຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ ລວມທັງເອກະສານທາງລັດຖະການທີ່ເປັນຄວາມລັບຂອງການຈັດຕັ້ງ ແລະ ຂອງຊາດໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ໂດຍບໍ່ໄດ້ຮັບອະນຸຍາດ;
3. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອບັງຄັບ, ນາບຂູ່, ໃຊ້ຄວາມຮຸນແຮງ, ແອບອ້າງ ຊື່ຜູ້ມີຖານະຕຳແໜ່ງ ຫຼື ສົມຮູ້ຮ່ວມຄິດ ກັບຜູ້ອື່ນ ເພື່ອຜົນປະໂຫຍດຂອງຕົນ, ພັກພວກ, ຍາດພີ່ນ້ອງ;
4. ຮັບເອົາ, ຮຽກເອົາ, ທວງເອົາສິນບົນ, ເປັນສື່ກາງໃນການໃຫ້ ຫຼື ຮັບເອົາສິນບົນ ເພື່ອຜົນປະໂຫຍດຂອງ ຕົນ, ຄອບຄົວ ແລະ ຍາດພີ່ນ້ອງ;
5. ກົດໜ່ວງ ຫຼື ຖ່ວງດຶງເອກະສານ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 79 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່**

ຫ້າມ ຜູ້ດຳເນີນທຸລະກິດ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ໂດຍບໍ່ໄດ້ຮັບອະນຸຍາດ;
2. ຄອບຄອງ, ນຳໃຊ້ເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ບໍ່ຜ່ານການກວດກາ ແລະ ຂຶ້ນທະບຽນ ລວມທັງການນຳເຂົ້າເຄື່ອງມືດັ່ງກ່າວ ໂດຍບໍ່ໄດ້ຮັບອະນຸຍາດ;
3. ໂຄສະນາ ເຜີຍແຜ່ ແລະ ສະໜອງຂໍ້ມູນ ຂ່າວສານ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ທີ່ບໍ່ຜ່ານການກວດກາ, ບໍ່ຖືກຕ້ອງຕາມມາດຕະຖານເຕັກນິກ ແລະ/ຫຼື ບໍ່ໄດ້ຮັບອະນຸຍາດ;
4. ປະຕິບັດບໍ່ຖືກຕ້ອງ ຕາມແຈ້ງການ ຫຼື ຄຳແນະນຳ ຂອງອົງການຄຸ້ມຄອງວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;
5. ມອບ, ໂອນ ຫຼື ໃຫ້ຢືມ, ສຳເນົາຖ່າຍ ຂໍ້ມູນ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ໂດຍບໍ່ໄດ້ຮັບອະນຸຍາດ;
6. ປອມແປງ, ໃຫ້ຢືມ, ໃຫ້ເຊົ່າ ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບສຳຫຼວດວັດແທກ ແລະ ສ້າງແຜນທີ່;
7. ປັບແກ້, ແກະ, ລອກກາໝາຍ ມາດຕະຖານເຕັກນິກຂອງເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່ ໂດຍບໍ່ໄດ້ຮັບອະນຸຍາດ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VIII
## ການຄຸ້ມຄອງ ແລະ ການກວດກາວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່
### ໝວດທີ 1
### ການຄຸ້ມຄອງວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່

**ມາດຕາ 80 ອົງການຄຸ້ມຄອງວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງພາຍໃນ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ປະກອບດ້ວຍ:

1. ກະຊວງພາຍໃນ;
2. ພະແນກພາຍໃນ ແຂວງ, ນະຄອນຫຼວງ;
3. ຫ້ອງການພາຍໃນ ເມືອງ, ເທດສະບານ, ນະຄອນ.

ນອກນັ້ນ, ຍັງມີຄະນະກຳມະການຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ ຊຶ່ງແມ່ນການຈັດຕັ້ງບໍ່ປະຈຳການທີ່ໄດ້ຮັບການແຕ່ງຕັ້ງໂດຍ ນາຍົກລັດຖະມົນຕີ ຕາມການສະເໜີຂອງລັດຖະມົນຕີກະຊວງພາຍໃນ ແລະ ມີກອງເລຂາຕັ້ງຢູ່ກະຊວງພາຍໃນ, ມີພາລະບົດບາດເປັນເສນາທິການໃຫ້ລັດຖະບານ ໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ, ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານກ່ຽວກັບຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ. ສຳລັບໂຄງປະກອບບຸກຄະລາກອນ, ສິດ ແລະ ໜ້າທີ່ ຂອງຄະນະກຳມະ

ອ່ານຕໍ່ສະບັບໜ້າ...




## ສິນນ້ຳໃຈ

ໂດຍ: ດັ້ນກົບເມກ

ບັນຫາປິ່ນອ້ອມການສຶກສານັ້ນບໍ່ເປັນພຽງແຕ່ເກີດຈາກວິທີການສອນຂອງຄູ ຫລື ຄູເອງຍັງຫົວເກົ່າບໍ່ປະຕິບັດຕາມແນວທາງປະຕິຮູບການສຶກສາໄລຍະໃໝ່ ແລະ ຍຸກສະໄໝ (ເວົ້າສະເພາະຄູບາງຄົນ) ໝາຍຄວາມວ່າກະໂຕຄູເອງຫັ້ນລະ ທີ່ບໍ່ຊອກວິທີສອນ, ບໍ່ປັບປຸງວິທີສອນ, ບໍ່ຊອກຄວາມຮູ້, ບໍ່ອ່ານຄົ້ນຄວ້າເປັນແບບຢ່າງໃຫ້ແກ່ນັກຮຽນ-ນັກສຶກສາ, ບາງສະຖາບັນການສຶກສາອາດປາກົດມີຄູບາງຄົນເຂົ້າຫ້ອງການເວົ້າແຕ່ເລື່ອງຊື້ຫວຍ-ຕີແຕ່ຄວາມຝັນແຕ່ບໍ່ເຄີຍຕີຄວາມວິຊາການ.

ຜູ້ຂຽນໄດ້ຮັບຟັງນັກສຶກສາບາງຄົນເລົ່າສູ່ຟັງເລື່ອງການສຶກສາຄົ້ນຄວ້າ-ສອບເສັງປ້ອງກັນບົດຈົບຊັ້ນ ເຊິ່ງປະກອບມີນັກສຶກສາຈຳນວນໜ້ອຍໜຶ່ງເວົ້າວ່າ ເວລາຂຽນບົດຈົບແລ້ວ ແຕ່ຍັງບໍ່ກ້າເອົາໄປໃຫ້ອາຈານກວດໃຫ້ ເພາະບໍ່ມີເງິນໃສ່ຊອງເປັນສິນນ້ຳໃຈ ເລື່ອງແບບນີ້ທ່ານຜູ້ອ່ານຟັງຫູໄວ້ຫູຢ່າຟ້າວໃຈຮ້ອນໂວຍວາຍດ່ວນສະຫລຸບ! ຖ້າວ່າອ່ານກວດບົດແລ້ວຕ້ອງມີສິນນ້ຳໃຈ-ມີຊອງຂາວ, ມີກະຕ່າໝາກໄມ້ຂອງຂວັນແທ້ ບັນດານັກສຶກສາທີ່ມາຈາກຕ່າງແຂວງຖິ່ງແປມີແຕ່ເງິນຄ່າກິນ-ຄ່າຢູ່-ຄ່າຮຽນ ແຕ່ບໍ່ມີໃສ່ຊອງຄ່າກວດບົດເຂົາຮູ້ສຶກອາຍບໍ່ກ້າເອົາໄປໃຫ້ອາຈານກວດໃຫ້.

ຜູ້ຂຽນຍົກເລື່ອງຄ່າກວດບົດນີ້ຂຶ້ນມາອາດບໍ່ມີລະບຽບວິໄນຂອງໂຮງຮຽນ ແຕ່ດ້ານພຶດຕິກຳມັນປາກົດຈະແຈ້ງທີ່ຮູ້ແກ່ໃຈ-ເຫັນຕຳຕາ ມັນກໍເປັນປາກົດການຫຍໍ້ທໍ້ ຫລາຍເຕີບໃຫ້ແກ່ວົງການການສຶກສາ ອາດເອົາທຸລະກິດອາຫານ, ເຄື່ອງນຸ່ງ-ຮ້ານກອບປີ້ເຂົ້າໃນລະບຽບໂຮງຮຽນ ແລ້ວຍັງບັງຄັບໃຫ້ນັກສຶກສາວ່າຕ້ອງໄປກິນເຂົ້າຮ້ານນັ້ນ, ຊື້ຮ້ານນີ້ ແຕ່ລາຄາສິນຄ້າຮ້ານດັ່ງກ່າວ ພັດແພງກວ່າຮ້ານອື່ນເພາະຕ້ອງໄດ້ຈ່າຍຄ່າສຳປະທານນຳນໍ!

ສັງລວມວ່າ: ຖ້າສະຖາບັນການສຶກສາມີທ່າອ່ຽງຜູກຂາດເອົາທຸລະກິດກາຍເປັນທຸລະກິດການສຶກສາໃນທາງທີ່ບໍ່ເໝາະສົມຖືກຕ້ອງຄືຊິບໍ່ຕ່າງກັບຮ້ານຂາຍຢາກັບໂຮງໝໍ... ຜູ້ຂຽນອະທິບາຍມາຂ້າງເທິງນັ້ນ ຕາມທາງສຽງນັກສຶກສາສົ່ງຂ່າວ ເປັນແນວໃດກໍຂໍແລກປ່ຽນນຳກັນເນີ້!




## ຮູບງົວກິນຫຍ້າ

\# ໂດຍ: ປ່າວກະບີ

| | |
|---|---|
| ນັກແຕ້ມ: | "ນີ້ທ່ານ... ຮູບແຜ່ນນັ້ນ ແມ່ນຮູບງົວກຳລັງກິນຫຍ້າ" |
| ຜູ້ເຂົ້າຊົມ: | "ຢູ່ໃສຫຍ້າ" |
| ນັກແຕ້ມ: | "ຫຍ້າຫັ້ນງົວກິນໝົດແລ້ວ" |
| ຜູ້ເຂົ້າຊົມ: | "ແຕ່ງົວເດຢູ່ໃສ?" |
| ນັກແຕ້ມ: | "ທ່ານຄືງບໍ່ຄິດຕິວ່າ ງົວມັນໂງ່ຢືນຢູ່ບ່ອນທີ່ມັນເລັມຫຍ້າຈົນກ້ຽງແລ້ວ ?" |

## COW GRAZING

\# By: BAOKBU

| | |
|---|---|
| Artist: | "That, sir, is a cow grazing" |
| Visitor: | "Where is the grass" |
| Artist: | "The cow has eaten it up" |
| Visitor: | "But where is the cow?" |
| Artist: | "You don't suppose she'd be fool enough to stay there after she'd eaten all the grass, do you?" |













| ຕິດເຊື້ອໃໝ່ | ຕິດເຊື້ອລວມ | ເສຍຊີວິດໃໝ່ | ເສຍຊີວິດສະສົມ |
|---|---|---|---|
| 14 | 216,568 | 0 | 665 |

| ແຂວງ | ພາຍໃນ | ນຳເຂົ້າ | ແຂວງ | ພາຍໃນ | ນຳເຂົ້າ |
|---|---|---|---|---|---|
| • ນະຄອນຫຼວງວຽງຈັນ | 10 | 0 | • ຫຼວງພະບາງ | 0 | 0 |
| • ອັດຕະປື | 3 | 0 | • ອຸດົມໄຊ | 0 | 0 |
| • ຈຳປາສັກ | 1 | 0 | • ຄຳມ່ວນ | 0 | 0 |
| • ສະຫວັນນະເຂດ | 0 | 0 | • ຊຽງຂວາງ | 0 | 0 |
| • ຫຼວງນ້ຳທາ | 0 | 0 | • ບໍ່ແກ້ວ | 0 | 0 |
| • ບໍລິຄຳໄຊ | 0 | 0 | • ວຽງຈັນ | 0 | 0 |
| • ໄຊສົມບູນ | 0 | 0 | • ສາລະວັນ | 0 | 0 |
| • ຫົວພັນ | 0 | 0 | • ໄຊຍະບູລີ | 0 | 0 |
| • ເຊກອງ | 0 | 0 | • ຜົ້ງສາລີ | 0 | 0 |

# ປະຕິບັດກົດໝາຍລາດຕະເວນຕາມລຳແມ່ນ້ຳຂອງ ຮ່ວມກັນລະຫວ່າງ 4 ຊາດ ຄັ້ງທີ 123

ແປ ແລະ ຮຽບຮຽງ: ນາກ ເມືອງມະໄນ



ມີການລາຍງານຂ່າວໃຫ້ຮູ້ວ່າ: ຕອນເຊົ້າຂອງວັນທີ 22 ພະຈິກຜ່ານມາ, ໜ່ວຍງານປະຕິບັດກົດໝາຍລາດຕະເວນຕາມລຳແມ່ນ້ຳຂອງຈາກ 4 ປະເທດຄື: ຈີນ, ລາວ, ມຽນມາ ແລະ ໄທ ໄດ້ຮ່ວມກັນລາດຕະເວນຕາມລຳແມ່ນ້ຳຂອງ ຄັ້ງທີ 123 ເຊິ່ງເຮືອທັງໝົດມີ 4 ລຳເຂົ້າຮ່ວມປະຕິບັດການໃນຄັ້ງນີ້ ໃນນັ້ນ, ມີເຮືອປະຕິບັດການຂອງຈີນ 2 ລຳ ໂດຍເລີ່ມອອກຈາກທ່າເຮືອຈິງຫ່າ ເມືອງປົກຄອງຕົນເອງເຜົ່າໄຕລື້ສິບສອງພັນນາ ແຂວງຢຸນນານ ເຊິ່ງໝາຍຄວາມວ່າການລາດຕະເວນຄັ້ງນີ້ ໄດ້ເລີ່ມຂຶ້ນຢ່າງເປັນທາງການແລ້ວ.

ການລາດຕະເວນດັ່ງກ່າວ, ຄາດວ່າຈະແກ່ຍາວເປັນເວລາ 4 ວັນ 3 ຄືນ, ຈະສຸມໃສ່ປາບປາມອາຊະຍາກຳຂ້າມຊາດ ເພື່ອຮັບປະກັນຄວາມປອດໄພ ແລະ ຄວາມປອດໄພຂອງເສັ້ນທາງຂົນສົ່ງສິນຄ້າຕາມລຳແມ່ນ້ຳຂອງ.

ແມ່ນ້ຳຂອງ ຫລື ທີ່ເອີ້ນກັນວ່າແມ່ນ້ຳລ້ານຊ້າງໃນປະເທດຈີນ ເປັນເສັ້ນທາງຂົນສົ່ງສິນຄ້າທີ່ສຳຄັນຂອງ 4 ດ່ານຊາຍແດນລະຫວ່າງຈີນ, ລາວ, ມຽນມາ ແລະ ໄທ ເຊິ່ງປະຕິບັດການຮ່ວມກັນຂອງ 4 ປະເທດນີ້ ໄດ້ເລີ່ມຕົ້ນຄັ້ງທຳອິດໃນເດືອນທັນວາ 2011 ແລະ ສືບຕໍ່ມາເຖິງປັດຈຸບັນ.

**ແຫລ່ງຂ່າວ: CRI**

# ກາຊັກສະຖານ ເລືອກຕັ້ງປະທານາທິບໍດີຄົນໃໝ່

ແປ ແລະ ຮຽບຮຽງ: ທະນາກອນ



ອີງຕາມລາຍງານຂ່າວໃຫ້ຮູ້ວ່າ: ໃນວັນທີ 20 ພະຈິກ 2022 ປະເທດກາຊັກສະຖານໄດ້ດຳເນີນການເລືອກຕັ້ງປະທານາທິບໍດີຄົນໃໝ່ ໂດຍມີຜູ້ລົງສະໝັກຮັບເລືອກຕັ້ງ ຈຳນວນ 6 ທ່ານເຂົ້າຮ່ວມ ມີຍິງ 2 ທ່ານ ລວມທັງທ່ານ ກາຊິມ ໂຈມັດ ໂຕກາເຢວ ປະທານາທິບໍດີຄົນປັດຈຸບັນ ແລະ ເປັນຄັ້ງທຳອິດທີ່ມີເພດຍິງເຂົ້າຮ່ວມລົງສະໝັກຊີງຕຳແໜ່ງປະທານາທິບໍດີຂອງກາສັກສະຖານ.

ຄະນະກຳມະການເລືອກຕັ້ງຂັ້ນສູນກາງຂອງກາຊັກສະຖານ ໄດ້ເປີດເຜີຍວ່າ: ຢູ່ທົ່ວປະເທດມີຜູ້ມີສິດເລືອກຕັ້ງປະມານ 11 ລ້ານ 9 ແສນ 5 ໝື່ນຄົນ, ໄດ້ມີສະຖານທີ່ບ່ອນບັດລົງຄະແນນສຽງຫລາຍກວ່າ 10.000 ແຫ່ງຢູ່ພາຍໃນ ແລະ ຕ່າງປະເທດ ເຊິ່ງມີພົນລະເມືອງທີ່ອອກມາໃຊ້ສິດໃນການປ່ອນບັດລົງຄະແນນສຽງ ປະມານ 69% ຂອງຈຳນວນທັງໝົດທີ່ມີສິດລົງຄະແນນສຽງ.

ການລົງຄະແນນສຽງໄດ້ເລີ່ມແຕ່ເວລາ 7 ໂມງເຖິງເວລາ 20 ໂມງຂອງວັນທີ 20 ພະຈິກຜ່ານມາ (ຕາມເວລາທ້ອງຖິ່ນ).

ທ່ານ ກາຊິມ ໂຈມັດ ໂຕກາເຢວ ໄດ້ດຳລົງຕຳແໜ່ງປະທານາທິບໍດີ ຫລັງຈາກທ່ານ ດີນູຣ ຊຸນຕານ ນາຊາຣບາເຢບ ອະດີດປະທານາທິບໍດີໄດ້ລາອອກໃນປີ 2019 ເຊິ່ງບໍ່ພໍເທົ່າໃດເດືອນຕໍ່ມາ ທ່ານ ກາຊິມ ໂຈມັດ ໂຕກາເຢວ ກໍໄດ້ຊະນະການເລືອກຕັ້ງດ້ວຍ 70% ຂອງຄະແນນສຽງທັງໝົດ. ຈາກການປະທ້ວງໃນເດືອນມັງກອນ 2022 ທ່ານ ກາຊິມ ໂຈມັດ ໂຕກາເຢວ ໄດ້ໃຫ້ຄຳໝັ້ນສັນຍາທີ່ຈະ "ສ້າງກາສັກສະຖານໃໝ່ທີ່ຍຸດຕິທຳ"; ຈາກນັ້ນ, ທ່ານໄດ້ປະກາດການປະຕິຮູບທາງດ້ານການເມືອງ ດ້ວຍການລົງປະຊາມະຕິກ່ຽວກັບລັດຖະທຳມະນູນສະບັບປັບປຸງ ເຊິ່ງມີເນື້ອໃນສຳຄັນແມ່ນກຳນົດວາລະການດຳລົງຕຳແໜ່ງປະທານາທິບໍດີໄດ້ສະໄໝດຽວ 7 ປີ.

**ແຫລ່ງຂ່າວ: Reuters**

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຫົວໜ້າບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ສຸພາວັນ ຫອມສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ